SOULIYASACK et al. (2021). Souphanouvong University Journal of Multidisciplinary Research and Development, ISSN 2521-0653. Volume 7. Issue 2. July – December 2021. Page 126 - 137

# ການຈັດການກິດຈະກຳການທ່ອງທ່ຽວພະຈົນໄພ ເມືອງວັງວຽງ ແຂວງວຽງຈັນ ກໍລະນີສຶກສາ: ກິດຈະກຳຂີ່ສະລິງ

**ສົມຄິດ ສຸລິຍະສັກ*, ແສງມະນີ ກອງເງິນ, ສັງທອງ ສີພອງໄຊ, ດາລຸນນີ ອິນດາວົງ**

*ພາກວິຊາບໍລິຫານການທ່ອງທ່ຽວ, ຄະນະເສດຖະສາດ ແລະ ການທ່ອງທ່ຽວ, ມະຫາວິທະຍາໄລສຸພານຸວົງ.*

***ຕິດຕໍ່ພົວພັນ:** ສົມຄິດ ສຸລິຍະສັກ, ພາກວິຊາການທ່ອງທ່ຽວ ແລະ ການໂຮງແຮມ, ຄະນະເສດຖະສາດ ແລະ ການທ່ອງທ່ຽວ, ມະຫາວິທະຍາໄລສຸພານຸວົງ,*

*ເບີໂທ: +856 20 5539 0078, ອີເມວ: somkit8988@gmail.com*

***ຂໍ້ມູນບົດຄວາມ:***

*ການສົ່ງບົດຄວາມ: 25 ມິຖຸນາ 2021*

*ປັບປຸງສຳເລັດ: 06 ກັນຍາ 2021*

*ການຕອບຮັບ: 27 ກັນຍາ 2021*

**ບົດຄັດຫຍໍ້**

ການວິໄຈຄັ້ງນີ້ມີຈຸດປະສົງເພື່ອສຶກສາ ການຈັດການກິດຈະກຳການທ່ອງທ່ຽວຂີ່ສະລິງ ເມືອງວັງວຽງ ແຂວງວຽງຈັນ ແລະ ສຶກສາແນວທາງການຈັດການກິດຈະກຳການທ່ອງທ່ຽວຂີ່ສະລິງ ເມືອງວັງວຽງ ແຂວງວຽງຈັນ. ປະຊາ ກອນທີ່ໃຊ້ໃນການຄົ້ນຄວ້າແມ່ນ ພາກສ່ວນລັດ, ພາກສ່ວນເອກະຊົນ, ຕົວແທນນັກທ່ອງທ່ຽວ ແລະ ກຸ່ມຕົວຢ່າງທີ່ໃຊ້ໃນການສຳຫຼວດທັງໝົດມີຈຳນວນ 18 ຄົນ, ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າແມ່ນແບບສຳພາດແບບເປັນທາງການ ທີ່ມີໂຄງສ້າງ ແລະ ບໍ່ມີໂຄງສ້າງ, ເປັນການສຳພາດແບບເຈາະເລິກ ແລະ ແບບສັງເກດແບບບໍ່ມີສ່ວນຮ່ວມທີ່ຜູ້ສຶກສາ ໄດ້ສ້າງຂຶ້ນຕາມແນວທາງ ແລະ ຈຸດປະສົງທີ່ໄດ້ກຳນົດໄວ້ດ້ວຍວິທີການວິເຄາະຂໍ້ມູນແບບພັນລະນາ, ຜົນການສຶກສາພົບວ່າ:

ການຈັດການກິດຈະກຳການທ່ອງທ່ຽວຂີ່ສະລິງ ປະກອບມີ: ການວາງແຜນຄື: 1) ໃນເບື້ອງຕົ້ນແມ່ນການກວດກາເບິ່ງຕະຫຼາດນັກທ່ອງທ່ຽວທາງດ້ານກິດຈະກຳທ່ອງທ່ຽວພະຈົນໄພ (ການຂີ່ສະລິງ), 2) ລົງສຳຫຼວດພື້ນທີ່ ທີ່ເໝາະສົມ, 3) ຫຼັງຈາກຮູ້ຈັກພື້ນທີ່ ທີ່ຈະສ້າງແລ້ວ ຄ່ອຍລົງໄປສຳຫຼວດຄວາມເປັນໄປໄດ້ ວ່າສະຖານທີ່ນັ້ນມີຈຸດຕົ້ນໄມ້ໃຫຍ່ຫຼາຍຈຸດທີ່ສາມາດສ້າງສະລິງເຊື່ອມຫາກັນໃນຫຼາຍໆຈຸດໄດ້ບໍ່ ແລະ ມີຈຸດຍຶດຕ່າງໆພຽງພໍບໍ, 4) ເມື່ອສຳຫຼວດແຕ່ລະຈຸດຂອງພື້ນທີ່ແລ້ວ ເຫັນວ່າມີຄວາມເປັນໄປໄດ້ຄ່ອຍລົງມືກໍ່ສ້າງກິດຈະກຳຂີ່ສະລິງໃຫ້ໄປຕາມແບບທີ່ຕົນເອງໄດ້ອອກແບບໄວ້, 5) ເມື່ອສ້າງຕັ້ງກິດຈະກຳຂີ່ສະລິງສຳເລັດແລ້ວ ໃນເບື້ອງຕົ້ນກໍ່ຝຶກຊ້ອມພະນັກງານນຳພາຂີ່ສະລິງໃຫ້ມີຄວາມຊຳນານໃນການນຳທ່ຽວ, ການຮັກສາຄວາມປອດໄພ ແລະ ການກວດເຊັກອຸປະກອນຮັບໃຊ້ທຸກໆຢ່າງ. ການຈັດຕັ້ງກອນຂອງໜ່ວຍບໍລິການສະລິງ ປະກອບມີ 4 ໜ່ວຍງານຫຼັກເປັນຕົ້ນຕໍຄື: ໜ່ວຍງານບໍລິຫານ-ການເງິນ, ໜ່ວຍງານຮັບຕ້ອນ, ໜ່ວຍງານນຳພາຂີ່ສະລິງ ແລະ ໜ່ວຍງານອະນາໄມ. ການຄວບຄຸມ ຜູ້ປະ ກອບການໄດ້ຄວບຄຸມໃນຫຼາຍດ້ານເຊັ່ນ: ການຄວບຄຸມດ້ານລາຄາການບໍລິການສະລິງໃຫ້ຢູ່ໃນເກນປົກກະຕິບໍ່ໃຫ້ແຂ່ງກັນລົງລາຄາ, ການຄວບຄຸມອຸປະກອນຮັບໃຊ້ໃນການຂີ່ສະລິງຕ່າງໆໃຫ້ມີຄວາມປອດໄພຢູ່ສະເໝີ, ການຄວບຄຸມດ້ານສິ່ງແວດລ້ອມ ແລະ ມີການລົງຕິດຕາມຢ່າງເປັນປົກກະຕິການກວດກາປະເມີນຜົນມາດຕະຖານການໃຫ້ບໍລິການການທ່ອງທ່ຽວແບບພະຈົນໄພ ເພື່ອຮັບປະກັນໃຫ້ການບໍລິການສະລິງບໍ່ໃຫ້ມີຜົນກະທົບຕໍ່ການທ່ອງທ່ຽວ. ແນວທາງໃນການຈັດການກິດຈະກຳການທ່ອງທ່ຽວຂີ່ສະລິງປະກອບມີ: ແນວທາງການຈັດການຂອງຫົວໜ່ວຍທຸລະກິດທ່ອງທ່ຽວສະລິງ ແລະ ແນວທາງການຈັດການກິດຈະກຳການທ່ອງທ່ຽວຂີ່ສະລິງຂອງພາກລັດ.

**ຄຳສຳຄັນ:** *ການທ່ອງທ່ຽວພະຈົນໄພ, ການຈັດການ, ການຂີ່ສະລິງ, ກິດຈະກຳການທ່ອງທ່ຽວ.*

SOULIYASACK et al. (2021). Souphanouvong University Journal of Multidisciplinary Research and Development, ISSN 2521-0653. Volume 7. Issue 2. July – December 2021. Page 126 - 137

# Organizing Adventure Tourism Activities in VangVieng District, Vientiane Province. Case Study: Sling Ride Activity

**Somkith SOULIYASACK*, Sengmany KONGNGERN, Sangthong SIFONGXAY and Dalounny INDAVONG**

*Tourism Management Department, Faculty of Economic and Tourism, Souphanouvong University, Lao PDR*

***Correspondence:** Somkith SOULIYASACK, Tourism Management Department, Faculty of Economic and Tourism, Souphanouvong University, Phone number: +856 20 5539 0078, Email: somkit8988@gmail.com.*

***Article Info:***
*Submitted: Jun 25, 2021*
*Revised: Sept 06, 2021*
*Accepted: Sept 27, 2021*

**ABSTRACT**

The purpose of this research was to study the management of sling tourism activities in Vang Vieng District, Vientiane Province and to study the way how to organize sling riding tourism activities in Vang Vieng. The populations, who participated in the research, were from public and private sectors. The sample groups consists of 18 people. The tools used in the research is formal interview. The interviews are structure and unstructured method. They are in depth-interview and non-participant observation. The guidelines are made and objectives are set to find out this research purposes and descriptive data analysis is used. The research found out that:

Sling ride activities management includes planning: 1) the initial market-check of tourism activity travel adventure (sling riding), 2) to survey appropriate places. 3) After that, explore the areas if there are sufficient big trees or not to make many sling bases and sling line. 4) If the area is considered suitable, the desired construction is to be next. 5) When the construction is completed, the final process is to train the sling rider staffs to be specialized in guiding the tourist riders, as well as checking all kind of sling equipment to ensure the safety of all sling riders. Organizing sling ride contains 4 main units: Administration - finance unit, reception unit, sling ride guider unit and cleaning unit. In terms of controlling: the entrepreneurs control many things such as controlling the service price to be in market price, not to be cheaper. The entrepreneurs also regularly check out the standard of all equipment to assure the customer safety. They care for the environmental impact as well. They also conduct measurement of their sling rider activity if it poses any bad impact on tourism or not. Guidelines for managing sling tourism activities include: Guidelines for the management of sling for tourism business sector and Guidelines for the management of sling tourism activities for official sector.

**Keywords:** *Travel Adventure, Management, Sling Riding, Tourism Activities*

## 1. ພາກສະເໜີ (Background)

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນປະເທດໜຶ່ງທີ່ມີບາດກ້າວຂະຫຍາຍຕົວທາງດ້ານອຸດສາຫະກຳການທ່ອງທ່ຽວ ເນື່ອງຈາກວ່າເປັນປະເທດທີ່ມີທຳມະຊາດສວຍງາມ ແລະ ອຸດົມສົມບູນ, ມີຫຼາຍສີສັນທາງປະຫວັດສາດ ແລະ ມີຄວາມຫຼາກຫຼາຍທາງດ້ານວັດທະນະທຳຮີດຄອງປະເພນີ. ພັກ ແລະ ລັດຖະບານລາວໄດ້ມີນະໂຍບາຍສົ່ງເສີມການທ່ອງທ່ຽວ ເລີ່ມແຕ່ປີ 1990 ເປັນຕົ້ນມາ ເພື່ອພັດທະນາຄວາມພ້ອມໃນການຮອງຮັບນັກທ່ອງທ່ຽວໃຫ້ມີປະສິດທິພາບ ພ້ອມທັງສຳຫຼວດ ແລະ ພັດທະນາແຫຼ່ງທ່ອງທ່ຽວໃໝ່ໃນ 3 ປະເພດຄື: ແຫຼ່ງທ່ອງທ່ຽວທາງທຳມະຊາດ, ແຫຼ່ງທ່ອງທ່ຽວທາງວັດທະນະທຳ ແລະ ແຫຼ່ງທ່ອງທ່ຽວທາງປະຫວັດສາດ. ສປປ ລາວ ມີທີ່ຕັ້ງເປັນຈຸດ ໃຈກາງທາງຜ່ານຢູ່ໃນພາກພື້ນແມ່ນ້ຳຂອງ ກໍຄື

ພາກພື້ນອາຊີ-ອາຄະເນ ຜ່ານການພັດທະນາເສດຖະກິດ-ສັງຄົມໃນຫຼາຍປີຜ່ານມາ ເຮັດໃຫ້ເສດຖະກິດຂອງປະເທດມີການຂະຫຍາຍຕົວ ແລະ ມີການພົວພັນກັບບັນດາປະເທດໃນພາກພື້ນ ແລະ ສາກົນໃນທຸກດ້ານ. ໃນ 30 ກວ່າປີມານີ້ ປະເທດເຮົາໄດ້ ເປັນຈຸດເຊື່ອມຕໍ່, ຈຸດແວ່ ແລະ ທາງຜ່ານ ຢູ່ໃນພາກພື້ນນີ້ ທັງທາງບົກ, ທາງອາກາດ ແລະ ທາງແມ່ນໍ້າຂອງ ພ້ອມດຽວກັນນັ້ນກໍມີສະເຖຍລະພາບທາງດ້ານການເມືອງທີ່ໝັ້ນຄົງ, ມີສັນຕິພາບ ແລະ  ມີການຮ່ວມມືທີ່ດີກັບປະເທດອື່ນໆໃນພາກພື້ນ ແລະ ໃນໂລກ. ຍ້ອນຄວາມໄດ້ປຽບທາງດ້ານທີ່ຕັ້ງຂອງ ສປປ ລາວ ປະກອບກັບ ສປປ ລາວ ມີສະເຖຍລະພາບທາງດ້ານການເມືອງທີ່ໝັ້ນຄົງ, ມີແຫຼ່ງທ່ອງທ່ຽວທາງທຳມະຊາດ , ວັດທະນະທຳ ແລະ ປະຫວັດສາດທີ່ອຸດົມສົມ ບູນສວຍສົດງົດງາມ ແລະ ມີຊື່ສຽງ, ປະຊາຊົນລາວບັນດາເຜົ່າມີນໍ້າໃຈເອື້ອເຟື້ອເພື່ອແຜ່ ເຊິ່ງກໍ່ເປັນປັດໄຈໜຶ່ງໃນການດຶງ ດູດນັກທ່ອງທ່ຽວໃຫ້ເຂົ້າມາປະເທດນັບມື້ນັບເພີ່ມຂຶ້ນ ເຫັນໄດ້ຈາກຈຳນວນນັກທ່ອງທ່ຽວ ແລະ ລາຍຮັບຈາກການທ່ອງທ່ຽວ ເຊິ່ງໃນປີ 2013 ມີຈຳນວນນັກທ່ອງທ່ຽວເຂົ້າມາລາວ 3.7 ລ້ານຄົນ, ສ້າງລາຍຮັບຈາກການ ທ່ອງທ່ຽວ 595 ລ້ານໂດລາ, ປີ 2014 ມີຈຳນວນນັກທ່ອງທ່ຽວເຂົ້າມາລາວ 4.1 ລ້ານຄົນ, ສາມາດສ້າງລາຍຮັບຈາກການທ່ອງທ່ຽວ 641 ລ້ານໂດລາ, ປີ 2015 ມີຈຳນວນນັກທ່ອງທ່ຽວເຂົ້າມາລາວ 4.3 ລ້ານຄົນ, ສ້າງລາຍຮັບຈາກການທ່ອງທ່ຽວເຖິງ 672 ລ້ານໂດລາ, ການທ່ອງທ່ຽວສ້າງລາຍຮັບເປັນອັນດັບສອງຂອງປະເທດຮອງຈາກຂະແໜງບໍ່ແຮ່ (ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, 2016: 6).

ຈາກນະໂຍບາຍການເປີດກວ້າງການເຊື່ອມໂຍງເສດຖະກິດກັບພາກພື້ນ ແລະ ສາກົນ ເຮັດໃຫ້ສະພາບການ ທ່ອງທ່ຽວຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ນັບມື້ນັບເພີ່ມຂຶ້ນໃນແຕ່ລະປີ ອັນເຮັດໃຫ້ຂົງເຂດທຸ ລະກິດການທ່ອງທ່ຽວຂະຫຍາຍຕົວໄປພ້ອມກັນເຊັ່ນ: ທຸລະກິດຂົນສົ່ງ, ທຸລະກິດໂຮງແຮມ-ເຮືອນພັກ, ທຸລະກິດອາຫານ, ທຸລະກິດສິນຄ້າທີ່ລະນຶກ, ສະຖານທີ່ບັນເທີງ ແລະ ອື່ນໆ. ລັດໄດ້ຖືເອົາອຸດສາຫະກຳການທ່ອງທ່ຽວເປັນຂະແໜງການສຳຄັນຂອງເສດຖະກິດແຫ່ງຊາດ ເພື່ອສົ່ງເສີມການບໍລິການ, ສ້າງວຽກເຮັດງານທຳ, ສ້າງລາຍຮັບ, ສ້າງອາຊີບໃຫ້ແກ່ປະຊາຊົນ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າໃຫ້ດີຂຶ້ນ. ພ້ອມກັນນັ້ນການ ທ່ອງທ່ຽວຍັງເປັນປັດໄຈທີ່ສຳຄັນ ທີ່ກໍ່ໃຫ້ເກີດການລົງທຶນທຸລະກິດທີ່ກ່ຽວຂ້ອງກັບຂະແໜງການທ່ອງທ່ຽວທັງທາງກົງ ແລະ ທາງອ້ອມ. ນອກຈາກນີ້, ການທ່ອງທ່ຽວຍັງຊ່ວຍໃນການສົ່ງເສີມ ແລະ ຊຸກຍູ້ໃຫ້ປະຊາຊົນມີຈິດສຳນຶກໃນການອະນຸຮັກຊັບພະຍາກອນການທ່ອງທ່ຽວ, ສົ່ງເສີມການພັດທະນາດ້ານວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດໃຫ້ຂະຫຍາຍຕົວ, ກາຍເປັນອຸດສາຫະກຳທ່ອງທ່ຽວທີ່ທັນສະໄໝ ແລະ ປະກອບສ່ວນເຂົ້າໃນການປົກປັກຮັກສາພັດທະນາປະເທດຊາດ. ດ້ວຍແນວທາງເປີດກວ້າງການພົວພັນຮ່ວມມືສາກົນຂອງ ພັກ-ລັດເຮົາ ນັກທ່ອງທ່ຽວ, ນັກລົງທຶນ, ນັກທຸລະກິດ ຈຶ່ງມີຄວາມສົນໃຈເຂົ້າມາທ່ອງທ່ຽວ ແລະ ລົງທຶນຢ່າງຫຼວງຫຼາຍ. ຜົນສຳເລັດດັ່ງກ່າວມັນໄດ້ຊີ້ໃຫ້ເຫັນເຖິງການເອົາໃຈໃສ່ຂອງລັດຖະບານ, ພາກສ່ວນທີ່ກ່ຽວຂ້ອງຂອງລັດທັງສູນກາງ ແລະ ທ້ອງ ຖິ່ນ, ພາກສ່ວນເອກະຊົນ ແລະ ປະຊາຊົນຜູ້ເປັນເຈົ້າຂອງພື້ນທີ່ແຫຼ່ງທ່ອງທ່ຽວ, ໂດຍທຸກພາກສ່ວນທີ່ກ່າວມານັ້ນ ໄດ້ຮ່ວມແຮງຮ່ວມໃຈ, ເອົາໃຈໃສ່ ແລະ ໃຫ້ຄວາມສຳຄັນກັບການຈັດການການທ່ອງ ທ່ຽວ ເນື່ອງຈາກວ່າການຈັດ ການການທ່ອງທ່ຽວນັ້ນຖືວ່າເປັນໝາກຫົວໃຈອັນສຳຄັນຂອງການພັດທະນາອຸດສາຫະກຳການທ່ອງທ່ຽວຂອງໂລກກໍຄືຂອງ ສປປ ລາວ ເຖິງແມ່ນວ່າ ສປປ ລາວ ຈະອຸດົມສົມບູນໄປດ້ວຍຊັບພະຍາກອນທາງດ້ານການທ່ອງທ່ຽວທີ່ຫຼາກຫຼາຍກໍຕາມ, ແຕ່ຫາກຂາດການບໍລິຫານ ແລະ ຈັດການການທ່ອງທ່ຽວທີ່ດີ ກໍ່ຈະເຮັດໃຫ້ການພັດທະນາຊັບ ພະຍາກອນການທ່ອງທ່ຽວເຫຼົ່ານັ້ນບໍ່ມີຄຸນະພາບ, ບໍ່ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດ ກໍ່ຄືນັກທ່ອງທ່ຽວ ແລະ ກາຍເປັນການລົງທຶນທີ່ບໍ່ມີຜົນກຳໄລ. ເມືອງວັງວຽງ ແຂວງວຽງຈັນ ກໍ່ເປັນເມືອງໜຶ່ງທີ່ມີສະຖານທີ່ທ່ອງທ່ຽວທີ່ໂດດເດັ່ນ ໃນດ້ານການທ່ອງທ່ຽວທາງທຳມະຊາດ ແລະ ວັດທະນະທຳໃນໄລຍະຜ່ານມາການທ່ອງທ່ຽວຢູ່ພາຍໃນເມືອງວັງວຽງ ໄດ້ຮັບຄວາມນິຍົມຊົມຊອບຈາກນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດຢ່າງຫຼວງຫຼາຍ ເຊິ່ງໃນປີ 2016 ມີນັກທ່ອງທ່ຽວເຂົ້າມາທ່ອງທ່ຽວເມືອງວັງວຽງທັງໝົດ 183,245 ຄົນ, ຍິງ 93,043 ຄົນ. ໃນນີ້ມີນັກທ່ອງທ່ຽວພາຍໃນປະເທດ 41,602 ຄົນ, ຍິງ 21,394 ຄົນ, ນັກທ່ອງທ່ຽວຕ່າງປະເທດມີ 141,643 ຄົນ, ຍິງ 71,649 ຄົນ, ສະເລ່ຍຄິດເປັນເປີເຊັນ ມີນັກທ່ອງທ່ຽວຈາກທະວີບອາຊີ 50%, ຈາກທະວີບຢູໂຣບ 45%, ແລະ ຈາກທະວີບອື່ນໆ 5%, ສະເລ່ຍລາຍຮັບເຂົ້າເມືອງວັງວຽງປະມານ 73,298,000,000 ກີບ (ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງວັງວຽງ ປີ 2016). ໜຶ່ງໃນບັນດາປັດໄຈທີ່ດຶງດູດນັກທ່ອງທ່ຽວເຂົ້າໄປທ່ອງທ່ຽວເມືອງວັງວຽງ ນອກຈາກຄວາມຫຼາກຫຼາຍ ແລະ ສວຍງາມຂອງຊັບພະຍາກອນການທ່ອງທ່ຽວດັ່ງກ່າວມາຂ້າງເທິງນັ້ນແລ້ວ ຍັງມີຄວາມຫຼາກຫຼາຍຂອງກິດຈະກຳທາງການທ່ອງທ່ຽວ ລວມທັງກິດຈະກຳການທ່ອງທ່ຽວທົ່ວໄປ ແລະ ກິດຈະກຳທ່ອງທ່ຽວພະຈົນໄພ ເຊັ່ນ: ການຂີ່ເຮືອກາຍັກ, ການຂີ່ບາລູນ, ໂດດນໍ້າ, ປີນຜາ ແລະ ຂີ່ສະລິງ ໃນນີ້ການຂີ່ສະລິງເປັນກິດຈະກຳໜຶ່ງທີ່ສ້າງຄວາມສົນໃຈໃຫ້ກັບນັກທ່ອງທ່ຽວທີ່ມັກພະຈົນໄພ ເພາະການຂີ່ສະລິງແມ່ນໄດ້ຢູ່ຕິດພັນ

ກັບທຳມະຊາດ ສາມາດເຫັນວິວທິວທັດອັນສວຍສົດງົດງາມຂອງທຳມະຊາດ ພ້ອມນັ້ນກໍ່ໄດ້ຮຽນຮູ້ລະບົບນິເວດ ແລະ ການອະນຸຮັກສິ່ງແວດລ້ອມຕະຫຼອດການພະຈົນໄພ ຍ້ອນແນວນັ້ນຈຶ່ງເຮັດໃຫ້ກິດຈະກຳດັ່ງ ກ່າວເປັນກິດຈະກຳທີ່ຂ້ອນຂ້າງມີຄ່ານິຍົມສູງສຳລັບນັກທ່ອງທ່ຽວທີ່ມັກກັບຄວາມທ້າທາຍ ແລະ ສ່ຽງໄພ. (ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງວັງວຽງ, 2016).

ເຖິງແນວໃດກໍ່ຕາມ ເຖິງວ່າກິດຈະກຳທ່ອງທ່ຽວພະຈົນໄພຈະເປັນກິດຈະກຳໜຶ່ງທີ່ມີຄ່ານິຍົມສູງສຳລັບນັກທ່ອງທ່ຽວ ແລະ ສາມາດສ້າງລາຍຮັບຢ່າງຫຼວງຫຼາຍໃຫ້ແກ່ຜູ້ປະກອບການ ແລະ ສັງຄົມປານໃດກໍ່ຕາມ ແຕ່ເຫັນວ່າ: ການຈັດການໃນກິດຈະກຳດັ່ງກ່າວຍັງບໍ່ທັນມີຄວາມເປັນເອກະພາບ, ການບໍລິການກິດຈະກຳດັ່ງກ່າວຂອງຜູ້ປະ ກອບການຍັງມີລັກສະນະຊະຊາຍ, ການຈັດການຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ, ບໍ່ມີລະບຽບກົດໝາຍສະເພາະ, ມີການແຂ່ງຂັນກັນໃນທາງທີ່ບໍ່ຖືກຕ້ອງ, ເຮັດໃຫ້ເກີດຄວາມຫຍຸ້ງຍາກໃນການຄຸ້ມຄອງ (ກຸ່ມໜ່ວຍບໍລິການສະລິງເມືອງວັງວຽງ, 2016). ຕໍ່ກັບບັນຫາດັ່ງກ່າວນີ້ໄດ້ເປັນແຮງບັນດານໃຈໃຫ້ຂ້າພະເຈົ້າ ສົນໃຈສຶກສາໃນຫົວຂໍ້ "ການຈັດການກິດຈະກຳການທ່ອງທ່ຽວພະຈົນໄພໃນໃນເມືອງວັງວຽງ, ແຂວງວຽງຈັນ ກໍລະນີສຶກສາ: ກິດຈະກຳຂີ່ສະລິງ" ໂດຍເລືອກເອົາເມືອງວັງວຽງ, ເປັນສະຖານທີ່ສຶກສາ ເພື່ອເປັນແນວທາງໃນການຈັດການກິດຈະກຳດັ່ງກ່າວ ສາມາດນຳເອົາຜົນຂອງການສຶກສາໃນຄັ້ງນີ້ໄປເປັນພື້ນຖານໃນການປັບປຸງການຈັດການກິດຈະກຳຂີ່ສະລິງ ເພື່ອການທ່ອງທ່ຽວໃນທົ່ວປະເທດ. ການຄົ້ນຄວ້າວິໄຈໃນຄັ້ງນີ້ແມ່ນມີຈຸດປະສົງໃນການຄົ້ນຄວ້າດັ່ງນີ້: 1) ສຶກສາການຈັດການກິດຈະກຳການທ່ອງທ່ຽວຂີ່ສະລິງ ເມືອງວັງວຽງ ແຂວງວຽງຈັນ. 2) ສຶກສາແນວທາງການຈັດການກິດຈະກຳການທ່ອງທ່ຽວຂີ່ສະລິງ ເມືອງວັງວຽງ ແຂວງວຽງຈັນ.

## 2. ອຸປະກອນ ແລະ ວິທີການ

### 2.1 ອຸປະກອນໃນການເກັບຂໍ້ມູນ

ອຸປະກອນທີ່ໃຊ້ເຂົ້າໃນການສຶກສາຄັ້ງນີ້ ແມ່ນໃຊ້ຄຳຖາມສຳພາດແບບເປັນທາງການ ທີ່ມີໂຄງສ້າງບໍ່ມີໂຄງສ້າງ, ເປັນການສຳພາດແບບເຈາະເລິກ ແລະ ແບບສັງເກດແບບບໍ່ມີສ່ວນຮ່ວມທີ່ຜູ້ສຶກສາໄດ້ສ້າງຂຶ້ນຕາມແນວທາງ ແລະ ຈຸດປະສົງທີ່ໄດ້ກຳນົດໄວ້ ແລະ ຈາກການສຶກສາຄົ້ນຄວ້າຈາກເອກະສານໜັງສືຕ່າງໆ ລວມທັງຜົນງານວິໄຈທີ່ມີລັກສະນະໃກ້ຄຽງ.

### 2.2 ວິທີການຄົ້ນຄວ້າ

ເປັນການຄົ້ນຄວ້າແບບຄຸນນະພາບ ດຳເນີນການຄົ້ນຄວ້າໂດຍການກຳນົດປະຊາກອນແມ່ນ ພາກສ່ວນລັດ, ພາກສ່ວນເອກະຊົນ, ຕົວແທນນັກທ່ອງທ່ຽວ ແລະ ກຸ່ມຕົວຢ່າງທີ່ໃຊ້ໃນການສຳຫຼວດທັງໝົດມີຈຳນວນ 18 ຄົນ, ເມື່ອໄດ້ຂໍ້ມູນຈາກການລົງເກັບກຳແລ້ວໄດ້ນຳເອົາຂໍ້ມູນດັ່ງກ່າວມາດຳເນີນວິທີການວິເຄາະຂໍ້ມູນ ແລະ ປະມວນຜົນຂໍ້ມູນດ້ວຍການນຳເອົາຂໍ້ມູນທີ່ໄດ້ມາຈາກເອກະສານ, ການສັງເກດ ແລະ ການສຳພາດຜູ້ທີ່ກ່ຽວຂ້ອງແລ້ວນຳມາດຳເນີນການວິເຄາະເນື້ອໃນ ດ້ວຍວິທີການວິເຄາະຂໍ້ມູນແບບພັນລະນາຮ່ວມກັບແນວຄວາມຄິດ, ທິດສະດີ ແລະ ບົດວິໄຈທີ່ກ່ຽວຂ້ອງ ເພື່ອນຳໄປສູ່ການອະທິບາຍໃນລັກສະນະທີ່ເປັນເຫດເປັນຜົນ ຕໍ່ກັບສະພາບຄວາມເປັນຈິງຂອງຂໍ້ມູນໃຫ້ຫຼາຍທີ່ສຸດ ເພື່ອໃຫ້ບັນລຸຕາມຈຸດປະສົງຂອງການສຶກສາທີ່ໄດ້ກຳນົດໄວ້.

## 3. ຜົນໄດ້ຮັບ (Result)

### 3.1 ການຈັດການກິດຈະກຳການທ່ອງທ່ຽວຂີ່ສະລິງ ເມືອງວັງວຽງ ແຂວງວຽງຈັນ.

**ການວາງແຜນໃນກິດຈະກຳຂີ່ສະລິງ**

1) ໃນເບື້ອງຕົ້ນແມ່ນການກວດກາເບິ່ງຕະຫຼາດນັກທ່ອງທ່ຽວທາງດ້ານກິດຈະກຳທ່ອງທ່ຽວພະຈົນໄພ (ການຂີ່ສະລິງ) ໃນຕ່າງປະເທດ ຕາມໂຊຊຽວຕ່າງໆ ວ່ານັກທ່ອງທ່ຽວນິຍົມຫຼິ້ນກິດຈະກຳດັ່ງກ່າວນີ້ໜ້ອຍຫຼາຍປານໃດໃນປະຈຸບັນ ແລະ ໃນອະນາຄົດ. 2) ລົງສຳຫຼວດພື້ນທີ່ທີ່ເໝາະສົມ ຊອກຫາຈຸດທີ່ມີນັກທ່ອງທ່ຽວເດີນທາງໄປທ່ຽວຫຼາຍ ແລະ ສະຖານທີ່ທ່ອງທ່ຽວທີ່ມີຄວາມພິເສດຄາດວ່າຈະມີຄົນເດີນທາງເຂົ້າມາຫຼາຍໃນອະນາຄົດ ຕົວຢ່າງ: ການສຳຫຼວດສ້າງກິດຈະກຳຂີ່ສະລິງຢູ່ ຖໍ້າປູຄຳ ແລະ ຖໍ້ານໍ້າ ເຊິ່ງປະຈຸບັນນີ້ແມ່ນມີນັກທ່ອງທ່ຽວມາໃຊ້ບໍລິການຢ່າງຫຼວງຫຼາຍອັນດັບຕົ້ນໆຂອງເມືອງວັງວຽງ. 3) ຫຼັງຈາກຮູ້ຈັກພື້ນທີ່ ທີ່ຈະສ້າງແລ້ວ ຄ່ອຍລົງໄປສຳຫຼວດຄວາມເປັນໄປໄດ້ ວ່າສະຖານທີ່ນັ້ນມີຈຸດຕົ້ນໄມ້ໃຫຍ່ຫຼາຍຈຸດທີ່ສາມາດສ້າງສະລິງເຊື່ອມຫາກັນໃນຫຼາຍໆຈຸດໄດ້ບໍ່ ແລະ ມີຈຸດຢຶດຕ່າງໆພຽງພໍບໍ. 4) ເມື່ອສຳຫຼວດແຕ່ລະຈຸດຂອງພື້ນທີ່ແລ້ວ ເຫັນວ່າມີຄວາມເປັນໄປໄດ້ຄ່ອຍລົງມືກໍ່ສ້າງກິດ ຈະກຳຂີ່ສະລິງໃຫ້ໄປຕາມແບບທີ່ຕົນເອງໄດ້ອອກແບບໄວ້. 5) ເມື່ອສ້າງຕັ້ງກິດຈະກຳຂີ່ສະລິງສຳເລັດແລ້ວ ໃນເບື້ອງຕົ້ນກໍ່ຝຶກຊ້ອມພະນັກງານນຳພາຂີ່ສະລິງໃຫ້ມີຄວາມຊຳນານໃນການນຳທ່ຽວ, ການຮັກສາຄວາມປອດໄພ ແລະ ການກວດແຊັກອຸປະກອນຮັບໃຊ້ທຸກໆຢ່າງ ພ້ອມດຽວກັນນັ້ນກໍ່ເຮັດການໂຄສະນາທາງສື່ຕ່າງໆ ແລະ ບໍລິການແຂກໄປພ້ອມໆກັນ.

ໃນການວາງແຜນໃນເບື້ອງຕົ້ນທາງໜ່ວຍບໍລິການແມ່ນທຸກຄົນບໍ່ມີປະສົບການເລີຍ ແລະ ພົບຄວາມຫຍຸ້ງຍາກລຳບາກພໍສົມຄວນ ແຕ່ເມື່ອເຄື່ອນໄຫວໄປໄລຍະໜຶ່ງແລ້ວກໍ່ເຫັນວ່າມັນບໍ່ໄດ້ຍາກ ແລະ ບໍ່ໄດ້ອັນຕະລາຍດັ່ງທີ່ຄິດໃນເບື້ອງຕົ້ນ. ຜ່ານການເຄື່ອນໄຫວມາຈົນເຖິງປະຈຸບັນນີ້ ເຫັນວ່ານັກທ່ອງທ່ຽວນິຍົມຊົມຊອບຫຼາຍ ແລະ ໃນຕໍ່ໜ້າແມ່ນຈະສ້າງຕັ້ງກິດຈະກຳຢ່ອນໂຕລົງ

ຈາກໜ້າຜາ, ກິດຈະກຳໂອນຊາເທິງຈອມພູ ແລະ ຂີ່ລົດບັກກີ່ຄາ (ແອ ນະຄອນສີ ເຈົ້າຂອງບໍລິສັດເອເຄໂຮມຈຳກັດ ແລະ ໜ່ວຍບໍລິການ ເອເຄໂຮມຊີບລາຍ ສຳພາດວັນທີ 23/05/2018).

**ການຈັດອົງກອນຂອງໜ່ວຍບໍລິການສະລິງ**

ໜ່ວຍບໍລິການສະລິງຈະປະກອບມີ 4 ໜ່ວຍງານຫຼັກ ເປັນຕົ້ນຕໍຄື: ໜ່ວຍງານບໍລິຫານ-ການເງິນ, ໜ່ວຍງານຮັບຕ້ອນ, ໜ່ວຍງານນຳພາຂີ່ສະລິງ ແລະ ໜ່ວຍງານອະນາໄມ ເຊິ່ງແຕ່ລະໜ່ວຍງານແມ່ນມີໜ້າທີ່ຮັບຜິດຊອບຂອງໃຜລາວເປັນອັນລະອຽດດັ່ງນີ້: 1) ໜ່ວຍງານບໍລິຫານ-ການເງິນ: ໜ່ວຍງານນີ້ແມ່ນເຮັດວຽກບໍລິຫານ ກ່ຽວກັບການບໍລິການສະລິງ ເປັນຕົ້ນແມ່ນການຈັດສັນແຂກທີ່ຈະໄປໃຊ້ບໍລິການຂີ່ສະລິງໃນແຕ່ລະຄັ້ງ ເພື່ອຮັບປະກັນດ້ານການຮອງຮັບຈຳນວນນັກທ່ອງທ່ຽວໃຫ້ພຽງພໍກັບຈຳນວນຊຸດຂີ່ສະລິງທີ່ຕົນເອງມີຢູ່ ແລະ ຈັດຕາລາງລຳດັບການຈອງຂອງແຂກໃນແຕ່ລະຊ່ວງເວລາ, ນອກຈາກນີ້ກໍຍັງເປັນໜ່ວຍງານທີ່ຄຸ້ມຄອງດ້ານລາຍຮັບ-ລາຍຈ່າຍຕ່າງໆທັງໝົດຂອງກິດຈະກຳຂີ່ສະລິງ. 2) ຫນ່ວຍງານຮັບຕ້ອນ: ໜ່ວຍງານນີ້ເປັນໜ່ວຍງານທີ່ເຮັດໜ້າທີ່ຕ້ອນຮັບແຂກ ຫຼື ອະທິບາຍລາຍລະອຽດຕ່າງໆຂອງກິດຈະກຳໃຫ້ແຂກຮັບຮູ້, ພ້ອມນັ້ນກໍ່ເປັນຜູ້ປະສານງານກັບໜ່ວຍງານບໍລິຫານ ແລະ ອຳນວຍຄວາມສະດວກຕ່າງໆ ໃຫ້ແກ່ແຂກຜູ້ທີ່ມາໃຊ້ບໍລິການ. 3) ໜ່ວຍງານນຳພາຂີ່ສະລິງ (ໄກ້ນຳທ່ຽວ): ແມ່ນໜ່ວຍງານທີ່ຢູ່ພາກສະໜາມຈຸດບໍລິການສະລິງ ມີໜ້າທີ່ຮັບ ປະກັນຄວາມປອດໄພໃນການນຳພາແຂກຂີ່ສະລິງ, ການກວດເຊັກສະລິງກ່ອນໃຫ້ບໍລິການແກ່ນັກທ່ອງທ່ຽວ, ນອກນັ້ນກໍ່ຍັງມີໜ້າທີແນະນຳແຂກກ່ຽວກັບຂັ້ນຕອນຕ່າງໆໃນການຂີ່ສະລິງນັບຕັ້ງແຕ່ກ່ອນຈະຂີ່ສະລິງ ໃນໄລຍະການຂີ່ສະລິງ ຈົນສິ້ນສຸດກິດຈະກຳ. 4) ໜ່ວຍງານອະນາໄມ: ແມ່ນເຮັດໜ້າທີ່ອະນາໄມສະຖານທີ່ບໍລິການ ເຊິ່ງລວມມີຈຸດພັກຜ່ອນ, ຫ້ອງນໍ້າ, ຕາມແລວສະລິງ, ອະນາໄມຊຸດທີ່ສວມໃສ່ໃນການຂີ່ສະລິງ ແລະ ອຸປະກອນຮັບໃຊ້ໃນການຂີ່ສະລິງຕ່າງໆ.

ພະນັກງານບໍລິການໃນກິດຈະກຳຂີ່ສະລິງຈະເປັນຄົນໃນທ້ອງຖິ່ນກວມເອົາອັດຕາ 95%, ສ່ວນພະນັກງານມາຈາກບ່ອນອື່ນມີພຽງ 5%. ໃນນີ້ແນວທາງໃນການພັດທະນາບຸກຄະລາກອນ ແມ່ນຜູ້ປະກອບການໄດ້ຈັດກອງປະຊຸມເດືອນລະ 1 ຄັ້ງ ເພື່ອຕຳນິສິ່ງຂ່າວຈຸດດີ-ຈຸດອ່ອນຂອງພະນັກງານບໍລິການສະລິງທັງໝົດ, ມີການຝຶກ ແລະ ຖ່າຍທອດຄວາມຮູ້ໃຫ້ກັບພະນັກງານໃໝ່ ໃຫ້ມີຄວາມຮູ້ຄວາມສາມາດເພື່ອສ້າງເປັນພະນັກງານສືບທອດ (ບຸນທັນ ສຸວັນນະວົງ ເຈົ້າຂອງບໍລິສັດທີຊີເຄອາເມຊິງທົວຈຳກັດ (ໜ່ວຍບໍລິການວັງວຽງພາລາໄດຊີບລາຍ) ສຳພາດຄັ້ງວັນທີ 16/05/2018).

**- ການຈັດການກິດຈະກຳຂີ່ສະລິງ**

ກິດຈະກຳຂີ່ສະລິງແມ່ນສາມາດເຊື່ອມຈອດກັບກິດຈະກຳອື່ນໄດ້ ໂດຍມີການລວມຢູ່ໃນໂປຼແກຣມອັນດຽວກັນ ຫຼື ແຍກຈາກກິດຈະກຳອື່ນກໍ່ໄດ້ ແລ້ວແຕ່ຄວາມຕ້ອງການຂອງລູກຄ້າ, ເຊິ່ງລາຄາໃນການຂີ່ສະລິງແມ່ນ 13$/ຄົນ. ໃນ 6 ທົວໜ່ວຍບໍລິການນີ້ ໄດ້ແບ່ງອອກເປັນ 2 ກຸ່ມ, ກຸ່ມລະ 3 ທົວໜ່ວຍ ເຊິ່ງແຍກອອກເປັນກຸ່ມທີ່ມີສະລິງຢູ່ໃກ້ກັບສາຍນໍ້າຊອງ ແລະ ກຸ່ມທີ່ມີສະລິງບໍ່ໄດ້ຢູ່ໃກ້ກັບສາຍນໍ້າຊອງຄື: 1) ໂປຼແກຣມກຸ່ມທີ່ມີສະລິງຢູ່ໃກ້ກັບສາຍນໍ້າຊອງ: ເມື່ອທ່ານຊື້ປີ້ທົວເຕັມມື້ຈາກໜ່ວຍບໍລິການໃດໜຶ່ງ ລາຍການທົວແມ່ນຈະເລີ່ມຕົ້ນຕອນເຊົ້າມື້ຕໍ່ມາ ໃນເວລາ 10:00 ໂມງ ແມ່ນເດີນທາງດ້ວຍລົດຂົນສົ່ງນັກທ່ອງທ່ຽວອອກຈາກເທດສະບານເມືອງຂຶ້ນໄປທາງທິດ ເໜືອ 15 ກິໂລແມັດ ຮອດສະຖານທີ່ທ່ອງທ່ຽວຖໍ້າຊາງ ແລະ ໃຊ້ເວລາຍ່າງຕໍ່ປະມານ 15 ນາທີ ແມ່ນຮອດສະ ຖານທີ່ທ່ອງທ່ຽວຖໍ້ານໍ້າ ໂດຍມີກິດຈະກຳຂີ່ກົງເບັງເຂົ້າຖໍ້າ ເມື່ອສຳເລັດກິດຈະກຳແລ້ວກໍພັກຜ່ອນກິນເຂົ້າສວຍ ຫຼັງຈາກນັ້ນກໍນຳພາຂີ່ສະລິງໃນໜ່ວຍບໍລິການເອເຄໂຮມຊີບລາຍທີ່ຕັ້ງຢູ່ໃນສະຖານທີ່ທ່ອງທ່ຽວນັ້ນ ຫຼື ບາງໜ່ວຍທີ່ມີສະລິງເປັນຂອງຕົນເອງແລ້ວ ກໍນຳພາແຂກຂີ່ລົດກັບລົງມາຈຸດປ່ອຍເຮືອກາຍັກ ລ່ອງເຮືອລົງມາຮອດຈຸດບໍລິການສະລິງຂອງຕົນເອງ ແລ້ວກໍ່ນຳພາຂີ່ສະລິງ ເມື່ອນຳພາຂີ່ສະລິງສຳເລັດແລ້ວກໍ່ນຳພາແຂກຂີ່ເຮືອກາຍັກລ່ອງຊົມວິວຕາມສາຍນໍ້າຊອງ ລົງມາຮອດຈຸດສິ້ນສຸດກິດຈະກຳຢູ່ໃນເທດສະບານເມືອງ ແລ້ວມີລົດນຳສົ່ງສະຖານທີ່ພັກແມ່ນສຳເລັດກິດຈະກຳ, 2) ໂປຼແກຣມກຸ່ມທີ່ບໍ່ມີສະລິງຢູ່ໃກ້ກັບສາຍນໍ້າຊອງ: ເມື່ອທ່ານຊື້ປີ້ທົວເຕັມມື້ຈາກໜ່ວຍບໍລິການໃດ ໜຶ່ງ ລາຍການທົວແມ່ນຈະເລີ່ມຕົ້ນຕອນເຊົ້າມື້ຕໍ່ມາ ໃນເວລາ 10:00 ໂມງ ແມ່ນເດີນທາງດ້ວຍລົດຂົນສົ່ງນັກທ່ອງທ່ຽວອອກຈາກເທດສະບານເມືອງຂຶ້ນໄປທາງທິດເໜືອ 15 ກິໂລແມັດ ຮອດສະຖານທີ່ທ່ອງທ່ຽວຖໍ້າຊາງ ແລະ ໃຊ້ເວລາຍ່າງຕໍ່ປະມານ 15 ນາທີ ແມ່ນຮອດສະຖານທີ່ທ່ອງທ່ຽວຖໍ້ານໍ້າ ໂດຍມີກິດຈະກຳຂີ່ກົງເບັງເຂົ້າຖໍ້າ ເມື່ອສຳເລັດກິດຈະກຳແລ້ວກໍພັກຜ່ອນກິນເຂົ້າສວຍ ຫຼັງຈາກນັ້ນກໍ່ນຳພາແຂກຂີ່ລົດກັບລົງມາຈຸດປ່ອຍເຮືອກາຍັກ ລ່ອງຊົມວິວຕາມສາຍນໍ້າຊອງ ລົງມາຮອດຈຸດສິ້ນສຸດກິດຈະກຳຢູ່ໃນເທດສະບານເມືອງ ຈະມີລົດຂົນສົ່ງໄປຮັບເອົານັກທ່ອງທ່ຽວນຳໄປຂີ່ສະລິງໃນຈຸດບໍລິການຂອງຕົນເອງ ແລະ ນຳທ່ຽວສະຖານທີ່ທ່ອງທ່ຽວຈຸດທີ່ນັກທ່ອງທ່ຽວຢາກໄປ ເປັນຕົ້ນແມ່ນສະຖານທີ່ທ່ອງທ່ຽວຖໍ້າປູຄຳ, 3) ໂປຼແກຣມຊື້ທົວປົກກະຕິ: ແມ່ນຈະຊື້ປີ້ທົວໃນມື້ນັ້ນ ຫຼື ເປັນມື້ຕໍ່ໄປກໍ່ໄດ້ ແຕ່ບໍ່ລວມເອົາກິດຈະກຳຂີ່ສະລິງ ເຊິ່ງໃນທົວນັ້ນຈະລວມມີການຍ່າງຈາກສະຖານທີ່ທ່ອງທ່ຽວຖໍ້າຊາງ ແລະ ໃຊ້ເວລາຍ່າງປະມານ 15 ນາທີແມ່ນຮອດສະຖານທີ່ທ່ອງທ່ຽວຖໍ້ານໍ້າ ໂດຍມີກິດຈະກຳຂີ່ກົງເບັງເຂົ້າຖໍ້າເມື່ອສຳເລັດກິດຈະກຳ

ກໍພັກຜ່ອນກິນເຂົ້າສວຍ ຫຼັງຈາກນັ້ນກໍນໍາພາແຂກຂີ່ລົດກັບລົງມາຈຸດປ່ອຍເຮືອກາຍັກ ລ່ອງຊົມວິວຕາມສາຍນ້ໍາຊອງ ລົງມາຮອດຈຸດສິ້ນສຸດກິດຈະກໍາຢູ່ໃນເທດສະບານເມືອງ. ແຕ່ເມື່ອນັກທ່ອງທ່ຽວໄປຮອດຈຸດບໍລິການ ແຕ່ມີຄວາມສົນໃຈຢາກຂີ່ສະລິງແມ່ນສາມາດຊື້ປີ້ຂຶ້ນຂີ່ສະລິງໄດ້ເລີຍ ຫຼື ນັກທ່ອງທ່ຽວທີ່ບໍ່ໄດ້ຊື້ປີ້ທົວໃນມື້ນັ້ນ ແຕ່ຢາກໄປຂີ່ສະລິງດ້ວຍຕົນເອງ ກໍ່ແມ່ນສາມາດໄປຈຸດທີ່ມີການບໍລິການສະລິງໄດ້.

ລາຍການນໍາທ່ຽວທີ່ໄດ້ຮັບຄວາມນິຍົມຈາກນັກທ່ອງທ່ຽວໃນແຕ່ລະມື້ ແມ່ນການໄປຂີ່ກົງເບັງເຂົ້າຖ້ຳນ້ຳ ກິນເຂົ້າສວຍຢູ່ສະຖານທີ່ທ່ອງທ່ຽວນັ້ນ ເມື່ອກິນເຂົ້າສວຍສໍາເລັດແລ້ວກໍ່ກັບອອກມາລ່ອງເຮືອກາຍັກຕາມສາຍນ້ຳຊອງ ແລະ ຂີ່ສະລິງ ເມື່ອຂີ່ສະລິງສໍາເລັດແລ້ວກໍ່ລ່ອງເຮືອກາຍັກຕໍ່ລົງມາ ຕາມແຄມນ້ຳຈະມີບາເຫຼົ້າ ຖ້າແຂກຢາກແວ່ຫຼິ້ນໄກ້ນໍາທ່ຽວກໍ່ຈະພາແວ່ ຖ້າບໍ່ແວ່ກໍ່ແມ່ນລ່ອງເຮືອກາຍັກລົງມາຮອດຈຸດສິ້ນສຸດ ແລະ ນໍາສົ່ງແຂກໄປຍັງທີ່ພັກຖືວ່າສິ້ນສຸດກິດຈະກໍາ (ອໍາພອນ ເຈົ້າຂອງໜ່ວຍບໍລິການພອນທົວຊິບລາຍ ສໍາພາດຄັ້ງວັນທີ 23/05/2018).

**- ຂັ້ນຕອນກ່ອນຂຶ້ນຂີ່ສະລິງ**

ກ່ອນຂຶ້ນຂີ່ສະລິງຕ້ອງໄດ້ມີການລົງທະບຽນ ແລະ ປະຕິບັດຕາມຂັ້ນຕອນດັ່ງນີ້: 1) ໃສ່ຊຸດຂີ່ສະລິງ, ໃສ່ໝວກກັນກະທົບ, ຊຶບມື ແລະ ເກີບບັງຕຸບ ຫຼື ເກີບທີ່ມີບ່ອນຫັດສິ້ນ. ພ້ອມດຽວກັນນັ້ນກໍກວດເຊັກເບິ່ງລູກລໍ້, ສາຍເຊັບຕີ້ທີ່ຕິດມາກັບຊຸດຂີ່ສະລິງວ່າຢູ່ໃນສະພາບພ້ອມໃຊ້ງານບໍ, 2) ພະນັກງານນໍາທ່ຽວຈະນໍາພາໄປຍັງຈຸດສາທິດທົດລ່ອງຂີ່ສະລິງຢູ່ໃນພາກພື້ນດິນ ພ້ອມທັງອະທິບາຍວິທີຕ່າງໆໃຫ້ແຂກເຂົ້າໃຈສິ່ງທີ່ຄວນເຮັດ, ສິ່ງທີ່ບໍ່ຄວນເຮັດ, ຄວນລະມັດລະວັງຫຍັງແດ່, ຂໍ້ຫ້າມຕ່າງໆ ແລະ ໃຫ້ແຂກທົດລອງຂີ່ຢູ່ໃນຈຸດທົດລອງ.

**- ການນໍາພາຂີ່ສະລິງ**

ພະນັກງານນໍາທ່ຽວຈະນໍາພາຂຶ້ນໄປຍັງຈຸດປ່ອຍສະລິງ ໂດຍມີພະນັກງານນໍາທ່ຽວປະຈໍາຢູ່ຈຸດປ່ອຍ ແລະ ເປັນຜູ້ປ່ອຍແຂກອອກເທື່ອລະຄົນ ກ່ອນຈະປ່ອຍແຂກອອກໄປ ຈະມີພະນັກງານນໍາທ່ຽວອີກຄົນໜຶ່ງຈະຂີ່ອອກໄປກ່ອນໃນທຸກໆຄັ້ງ ເພື່ອລໍຖ້າຮັບແຂກໃນປາຍທາງ ແລະ ໃຫ້ຄໍາແນະນໍາຕາມແຕ່ລະຈຸດທີ່ມີຄວາມແຕກຕ່າງກັນໄປ, ສໍາລັບການເກາະເຊືອກຕ່າງໆໄປຕາມສາຍສະລິງ ຫຼື ການຢ່ອນໂຕລົງຈາກທີ່ສູງ ແມ່ນພະນັກງານນໍາທ່ຽວຈະເປັນຜູ້ຄອຍຊ່ວຍເຫຼືອໃນທຸກໆຄັ້ງ.

**- ການອໍານວຍຄວາມສະດວກ**

ການອໍານວຍຄວາມສະດວກໃນການໃຫ້ບໍລິການ ແມ່ນເລີ່ມແຕ່ແຂກເຂົ້າມາຊື້ປີ້ກໍ່ຈະມີພະນັກງານຕ້ອນຮັບເປັນຜູ້ແນະນໍາໃນລາຍລະອຽດຂອງກິດຈະກໍາຂີ່ສະລິງ, ແນະນໍາລາຍການທ່ອງທ່ຽວຕ່າງໆ ຫຼື ຂໍ້ມູນຂ່າວສານອື່ນກ່ຽວກັບການທ່ອງທ່ຽວໃຫ້ແກ່ແຂກຜູ້ທີ່ມີຄວາມສົນໃຈ ນອກນັ້ນ ຍັງມີລົດຮັບ-ສົ່ງຈາກໂຮງແຮມຈຸດທີ່ເປັນທີ່ພັກຂອງນັກທ່ອງທ່ຽວ ຫາຈຸດຂີ່ສະລິງ ພ້ອມທັງມີໄກ້ນໍາທ່ຽວນໍາພາໄປຍັງຈຸດບໍລິການສະລິງ, ມີໄກ້ນໍາທ່ຽວເປັນຜູ້ນໍາພາແຂກນຸ່ງຊຸດຂີ່ສະລິງ ແລ້ວແນະນໍາລະບຽບໃນການຂີ່ສະລິງ ເປັນຕົ້ນແມ່ນຂໍ້ຫ້າມຕ່າງໆ ພ້ອມທັງນໍາພາແຂກໄດ້ທົດລອງຂີ່ຢູ່ພາກພື້ນດິນກ່ອນຂຶ້ນຂີ່ຕົວຈິງ, ຢູ່ໃນຈຸດບໍລິການສະລິງກໍ່ຍັງມີບ່ອນນັ່ງພັກ-ເຊົາທີ່ກວ້າງຂວາງ ສາມາດໄປນັ່ງພັກຜ່ອນຊົມວິວທິວທັດທໍາມະຊາດອັນສວຍສົດງົດງາມໄດ້ ໃນສະຖານທີ່ກໍ່ຈະມີຮ້ານອາຫານໄວ້ຄອຍບໍລິການທ່ານ, ມີຫ້ອງນ້ຳສາທາລະນະ ແລະ ມີບ່ອນເກັບມ້ຽນເຄື່ອງທີ່ບໍ່ຈໍາເປັນໃນການຂີ່ສະລິງກໍ່ສາມາດຝາກໄວ້ໄດ້.

ດັ່ງທີ່ເຮົາຮັບຮູ້ນໍາກັນແລ້ວວ່າ ເມືອງວັງວຽງເປັນເມືອງທ່ອງທ່ຽວອັນດັບໜຶ່ງຂອງແຂວງວຽງຈັນ ແລະ ເປັນເມືອງທີ່ມີທິວທັດທໍາມະຊາດທີ່ຍັງອຸດົມສົມບູນ ເຊິ່ງເປັນເງື່ອນໄຂອັນສະດວກໃຫ້ແກ່ປະຊາຊົນກໍ່ຄືນັກທຸລະກິດຜູ້ປະກອບການ ຜູ້ທີ່ມີເງື່ອນໄຂທີ່ຈະມາລົງທຶນເຮັດທຸລະກິດການທ່ອງທ່ຽວ ຈັດກິດຈະກໍາການທ່ອງທ່ຽວຢູ່ເມືອງວັງວຽງແມ່ນມີຫຼາຍກິດຈະກໍາທີ່ແຕກຕ່າງກັນ ສ່ວນຫຼາຍແມ່ນກິດຈະກໍາທ່ອງທ່ຽວພະຈົນໄພເຊັ່ນ: ລ່ອງເຮືອກາຍັກ, ປີນຜາ, ຊົມວິວ, ຂີ່ສະລິງ, ຂີ່ບາລູນ ແລະ ກິດຈະກໍາອື່ນໆ... ນອກຈາກທໍາມະຊາດຈະອໍານວຍຄວາມສະດວກແລ້ວ ທາງພາກລັດ ແລະ ການຈັດຕັ້ງຂອງເມືອງກໍ່ໄດ້ເປີດກວ້າງໃຫ້ແກ່ນັກທຸລະກິດ ກໍ່ຄືຜູ້ປະກອບການຜູ້ທີ່ມີເງື່ອນໄຂຈະເຮັດທຸລະກິດການທ່ອງທ່ຽວຢູ່ໃນເມືອງວັງວຽງເຊັ່ນ: ການສໍາປະທານດິນຂອງລັດ (ຂອບເຂດປ່າໄມ້) ເພື່ອສ້າງຕັ້ງກິດຈະກໍາຂີ່ສະລິງ ພາກລັດແມ່ນອໍານວຍຄວາມສະ ດວກໃຫ້ ແລະ ອອກເອກະສານສໍາປະທານໃຫ້ຢ່າງຖືກຕ້ອງຕາມລະບຽບກົດໝາຍ (ເພັດສະໄໝ ແກ້ວກະເສີມສຸກ ຫົວໜ້າກອງຕໍາຫຼວດທ່ອງທ່ຽວແຂວງວຽງຈັນປະຈໍາເມືອງວັງວຽງ ສໍາພາດວັນທີ 16/05/2018).

**- ການຈັດການລະບົບຄວາມປອດໄພ**

ການຈັດການລະບົບຄວາມປອດໄພ ຜູ້ປະກອບການໄດ້ເອົາໃຈໃສ່ກ່ຽວກັບດ້ານນີ້ເປັນພິເສດ ເຊິ່ງໄດ້ເຮັດເປັນປະຈໍາຢ່າງເປັນປົກກະຕິ ແຕ່ສໍາລັບມື້ທີ່ມີຝົນຕົກແຮງ ຫຼື ລົມພັດແຮງ ແມ່ນຈະມີການກວດກາລະອຽດເປັນພິ ເສດ ເປັນຕົ້ນແມ່ນການກວດກາຈຸດຍຶດຕ່າງໆ, ການກວດກາຖານພັກເທິງຕົ້ນໄມ້, ສາຍສະລິງ, ຊຸດຂີ່ສະລິງ ແລະ ອຸປະກອນຮັບໃຊ້ຕ່າງໆ. ເມື່ອນັກທ່ອງທ່ຽວເດີນທາງຮອດຈຸດບໍລິການສະລິງ ກໍ່ຈະມີພະນັກງານບໍລິການນໍາທ່ຽວມາຄອຍເບິ່ງແຍງ ແລະ ຕ້ອນຮັບທຸກຄົນເປັນຢ່າງດີ ລວມໄປເຖິງກ່ອນທີ່ຈະຫຼິ້ນກິດຈະກໍາສຸດທ້າຍທາຍນີ້ ກໍ່ໄດ້ມີການອົບຮົມ ແລະ ແນະນໍາອຸປະກອນ

ຮັກສາຄວາມປອດໄພທີ່ເຮົາຕ້ອງສວມໃສ່ຢູ່ຕະຫຼອດເວລາ ລວມເຖິງຂໍ້ຫ້າມ ແລະ ສິ່ງທີ່ບໍ່ຄວນເຮັດຕ່າງໆໃນເວລາຫຼິ້ນກິດຈະກຳຂີ່ສະລິງ. ຖ້າຫາກເວລາແຂກຂີ່ສະລິງແລ້ວເກີດອຸບັດຕິເຫດບາດເຈັບເລັກໜ້ອຍ ແມ່ນຈະມີເຄື່ອງປະຖົມພະຍາບານເບື້ອງຕົ້ນໄວ້ໃຫ້ແຂກ ເຊິ່ງແມ່ນໄກ້ນຳທ່ຽວເປັນຜູ້ປິ່ນປົວໃຫ້ ແຕ່ຖ້າຫາກເກີດອຸບັດຕິເຫດໃນກໍລະນີຮ້າຍແຮງແມ່ນໄດ້ມີລົດນຳສົ່ງແຂກໄປໂຮງໝໍໃຫ່ຍເມືອງວັງວຽງຢ່າງທ່ວງທັນກັບເວລາ. ນັກທ່ອງທ່ຽວທັງ 8 ທ່ານແມ່ນມີຄວາມຄິດເຫັນຄ້າຍຄືກັນ ເປັນຕົ້ນແມ່ນໃຫ້ເຈົ້າຂອງທຸລະກິດເອົາໃຈໃສ່ດ້ານຄວາມປອດໄພໃນການບໍລິການຂີ່ສະລິງເປັນຫຼັກ ເພາະກິດຈະກຳຂີ່ສະລິງແມ່ນໄດ້ມີການສ່ຽງໄພຢູ່ຕະຫຼອດເວລາຂອງການຫຼິ້ນກິດຈະກຳ ແລະ ມີໂອກາດເກີດອຸບັດຕິເຫດໄດ້ງ່າຍ.

**ການຄວບຄຸມ**

ໃນດ້ານການຄວບຄຸມ ຜູ້ປະກອບການໄດ້ຄວບຄຸມໃນຫຼາຍດ້ານເຊັ່ນ: ການຄວບຄຸມດ້ານລາຄາການບໍລິການສະລິງໃຫ້ຢູ່ໃນເກນປົກກະຕິບໍ່ໃຫ້ແຂ່ງກັນລົງລາຄາ, ການຄວບຄຸມອຸປະກອນຮັບໃຊ້ໃນການຂີ່ສະລິງຕ່າງໆໃຫ້ມີຄວາມປອດໄພຢູ່ສະເໝີ, ການຄວບຄຸມດ້ານສິ່ງແວດລ້ອມບໍ່ໃຫ້ຖິ້ມຂີ້ເຫຍື້ອຊະຊາຍ ບໍ່ຕັດຕົ້ນໄມ້ເດີມທີ່ມີຢູ່ແລ້ວ ແລະ ມີການປູກຕົ້ນໄມ້ເພີ່ມຕື່ມອີກ, ເປັນເຈົ້າການໃນການຮັກສາແຫຼ່ງນ້ຳ ບໍ່ປ່ອຍນ້ຳເສຍລົງແມ່ນ້ຳ ບໍ່ຖິ້ມຂີ້ເຫຍື້ອລົງແມ່ນ້ຳ ແລະ ມີການລົງຕິດຕາມຢ່າງເປັນປົກກະຕິ (ບຸນຕິ ຈັນທິລາດ ເຈົ້າຂອງໜ່ວຍບໍລິການກຣີນວິວຊິບລາຍ ສຳພາດຄັ້ງວັນທີ 11/05/2018).

ໃນການຄວບຄຸມດ້ານຕ່າງໆຂອງຜູ້ປະກອບການ ມີບາງດ້ານກໍ່ສາມາດຄວບຄຸມໄດ້ ບາງດ້ານກໍ່ບໍ່ສາມາດຄວບຄຸມໄດ້ດີ ເປັນຕົ້ນແມ່ນການຄວບຄຸມທາງດ້ານລາຄາແມ່ນຍັງມີການແຂ່ງຂັນກັນໃນທາງທີ່ບໍ່ຖືກຕ້ອງ, ການຄວບຄຸມທາງດ້ານສິ່ງແວດລ້ອມຍັງບໍ່ທັນໄດ້ເຮັດຢ່າງຈິງຈັງ ເປັນຕົ້ນແມ່ນການປະເມີນຜົນກະທົບຕ່າງໆຕໍ່ສິ່ງແວດລ້ອມ.

**ການກວດກາປະເມີນຜົນ**

ການກວດກາປະເມີນຜົນ ມາດຕະຖານການໃຫ້ບໍລິການການທ່ອງທ່ຽວແບບພະຈົນໄພ ເພື່ອຮັບປະກັນໃຫ້ ການບໍລິການສະລິງບໍ່ໃຫ້ມີຜົນກະທົບຕໍ່ການທ່ອງທ່ຽວ ອັນເປັນຄວາມເຊື່ອໝັ້ນຕໍ່ນັກທ່ອງທ່ຽວ ເຊິ່ງມັນສະແດງໃຫ້ເຫັນເຖິງມາດຕະຖານດ້ານຄວາມປອດໄພ ແລະ ລະບົບການເບິ່ງແຍງຈັດການຂອງຜູ້ທີ່ມີສ່ວນຮ່ວມໃນວຽກງານການທ່ອງທ່ຽວພະຈົນໄພ ໃນນີ້ການກວດກາ ແມ່ນໄດ້ປະຕິບັດເປັນປະຈຳ ເຊິ່ງໄດ້ແຍກການກວດກາອອກໄປເປັນແຕ່ລະພາກສ່ວນຄື: ພາກສ່ວນທີໜຶ່ງແມ່ນການກວດກາດ້ານບັນຊີລາຍຮັບ-ລາຍຈ່າຍ, ພາກສ່ວນທີສອງແມ່ນການກວດກາປະຈຳວັນກ່ຽວກັບອຸປະກອນຮັບໃຊ້ການຂີ່ສະລິງຕ່າງໆ ນ໋ອດຍຶດແຕ່ລະຈຸດ, ສາຍສະລິງ ແລະ ຖານພັກເທິງຕົ້ນໄມ້ ເພື່ອນຳໄປປະເມີນຜົນວ່າສິ່ງໃດຢູ່ໃນສະພາບໃດ ສິ່ງໃດທີ່ຄວນປັບປ່ຽນ ຫຼື ສ້ອມແປງຄືນ.

ການສ້າງຕັ້ງກິດຈະກຳຂີ່ສະລິງສ່ວນໃຫ່ຍແລ້ວແມ່ນບໍ່ມີຜົນກະທົບຕໍ່ທຳມະຊາດຫຼາຍປານໃດ ເພາະໄດ້ມີເອກະສານກ່ຽວກັບການອະນຸຍາດ ແມ່ນຫ້າມບໍ່ໃຫ້ເຈົ້າຂອງທຸລະກິດຕັດຕົ້ນໄມ້ຊະຊາຍ ໃຫ້ຮັກສາສະພາບແວດລ້ອມບໍລິເວນດັ່ງກ່າວໃຫ້ຢູ່ຄືເດີມ ມີແຕ່ໃຊ້ສາຍສະລິງຈ່ອງໃສ່ຕົ້ນໄມ້ ຫຼື ໜ້າຜາ ໂດຍທີ່ບໍ່ມີການຄຸດຄົ້ນອອກຢ່າງຊະຊາຍ (ສອນທະວີ ພົມມະໄກສອນ ວິຊາການຈາກຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດ ລ້ອມເມືອງວັງວຽງ, ໜ່ວຍງານຕິດຕາມກວດກາ ແລະ ສິ່ງແວດລ້ອມ ສຳພາດວັນທີ 17/05/2018).

**3.2 ແນວທາງການຈັດການກິດຈະກຳການທ່ອງທ່ຽວຂີ່ສະລິງເມືອງວັງວຽງ ແຂວງວຽງຈັນ.**

**ແນວທາງການຈັດການຂອງຜູ້ປະກອບການ**

- ຈັດກອງປະຊຸມພະນັກງານທັງໝົດຂອງໜ່ວຍບໍລິການສະລິງໃນທຸກໆເດືອນ ເພື່ອຕຳນິສິ່ງຂ່າວຈຸດດີ-ຈຸດອ່ອນ ແລະ ສິ່ງທີ່ຄວນປັບປຸງແກ້ໄຂ ເພື່ອພັດທະນາໃຫ້ພະນັກງານມີຄວາມຊຳນານຂຶ້ນເລື້ອຍໆ ນອກຈາກນັ້ນກໍ່ເພື່ອຮັບຟັງການລາຍງານຂອງພະນັກງານກ່ຽວກັບຈຸດທີ່ຕ້ອງຄວນໄດ້ປັບປຸງຕ່າງໆ.
- ຝຶກຝົນພະນັກງານໃຫ້ມີຄວາມຊຳນິຊຳນານໃນທຸກດ້ານໃນການໃຫ້ບໍລິການສະລິງ ເພື່ອເຮັດໃຫ້ການບໍ ລິການມີຄຸນະພາບດີຂຶ້ນເລື້ອຍໆ, ການສ້ອມແປງສະລິງ ແລະ ສົ່ງໄປຝຶກອົບຮົມການປະຖົມພະຍາບານຂັ້ນຕົ້ນ ເພື່ອໃຫ້ຮູ້ຈັກການປິ່ນປົວ ຫຼື ເຄື່ອນຍ້າຍແຂກເວລາໃຫ້ຖືກວິທີກໍລະນີທີ່ແຂກເກີດອຸບັດຕິເຫດ.
- ມີການກວດເຊັກອຸປະກອນຢ່າງເປັນປະຈຳ ເພື່ອຮັບປະກັນດ້ານຄວາມປອດໄພໃນການບໍລິການ ພ້ອມດຽວກັນກໍ່ກວດສອບມາດຖານຂອງໂຄງສ້າງໃນແຕ່ລະຈຸດຢ່າງເປັນປົກກະຕິ ເພື່ອຮັບປະກັນໃນການຮັບນ້ຳໜັກເວລາການບໍລິການນັກທ່ອງທ່ຽວ.
- ເປັນເຈົ້າການໃນການອະນຸຮັກສິ່ງແວດລ້ອມ ແລະ ລະດົມໃຫ້ປະຊາຊົນທີ່ອາໃສດຳລົງຊີວິດຢູ່ໃນຂອບເຂດດັ່ງກ່າວຮັກສາສະພາບແວດລ້ອມຮ່ວມກັນ ເພື່ອບໍ່ໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ມີການປູກຕົ້ນໄມ້ເພີ່ມເຕີມຕາມຂອບເຂດຮັບຜິດຊອບຂອງຕົນເອງ.
- ປະຊາສຳພັນກ່ຽວກັບກິດຈະກຳຂີ່ສະລິງ ຕາມສື່ອອນລາຍຕ່າງໆໃຫ້ຫຼາກຫຼາຍຂຶ້ນກວ່າເກົ່າ ເພື່ອເຂົ້າເຖິງກຸ່ມເປົ້າໝາຍທີ່ຫຼາກຫຼາຍ.

- ຍົກລະດັບໃນການບໍລິການ ໃຫ້ນັບມື້ນັບດີຂຶ້ນເລື້ອຍໆ ເພື່ອດຶງດູດນັກທ່ອງທ່ຽວໃຫ້ນັບມື້ນັບເພີ່ມຂຶ້ນ ພວກເຮົາມີການກໍານົດການບໍລິການລູກຄ້າຄື: ນັກທ່ອງທ່ຽວ 3 ທ່ານ ຕໍ່ພະນັກງານ 2 ທ່ານ ແລະ ຜ່ານມາພວກເຮົາເຫັນວ່າລູກຄ້າມີຄວາມປອດໄພ ແລະ ພໍໃຈກັບການບໍລິການຂອງພວກເຮົາ ໃນນີ້ແມ່ນລູກຄ້າຄົນເກົ່າຫຼືໃດ້ມາໃຊ້ບໍລິການກິດຈະກໍາຂອງພວກເຮົາເພີ່ມຂຶ້ນໃນແຕ່ລະປີ ສະນັ້ນກິດຈະກໍາຂີ່ສະລິງຈຶ່ງເປັນກິດຈະກໍາຫຼັກຂອງລາຍຮັບຂອງພວກເຮົາ (ລ່ອງ ຫຼວງຜ່ານ ຜູ້ຈັດການບໍລິສັດທ່ອງທ່ຽວວັນເດີຟູນ (ໜ່ວຍບໍລິການວັນເດີຟູນຊິບລາຍ) ສໍາພາດວັນທີ 22/05/2018).

**ແນວທາງຂອງພາກລັດໃນການຄຸ້ມຄອງຜູ້ປະກອບການກິດຈະກໍາທ່ອງທ່ຽວພະຈົນໄພ ຕໍ່ກັບການຈັດກິດຈະກໍາຂີ່ສະລິງ**

- ຕ້ອງໄດ້ເຊີນຜູ້ປະກອບການສະລິງທັງໝົດມາສຶກສາອົບຮົມແນະນໍາໃຫ້ຮັບຮູ້ເຂົ້າໃຈກ່ຽວກັບກິດຈະກໍາດັ່ງ ກ່າວ ເພື່ອໃຫ້ເຂົາເຈົ້າເອົາໃຈໃສ່ໃນການຕິດຕາມຄຸ້ມຄອງ.

- ການປະຕິບັດພັນທະຕ່າງໆໃຫ້ແກ່ລັດ, ໃຫ້ແກ່ບ້ານທີ່ທຸລະກິດຕັ້ງຢູ່ ເພື່ອໃຫ້ທາງບ້ານມີສ່ວນຮ່ວມໃນການຄຸ້ມຄອງປົກປັກຮັກສາຊ່ວຍ.

- ຕ້ອງມີບໍລິສັດປະກັນໄພຄໍ້າປະກັນໃນກໍລະນີເກີດອຸປະຕິເຫດ.

- ສະລິງຕ້ອງມີລະດັບຄວາມສູງ, ຄວາມຍາວ, ຂະໜາດຂອງຕົ້ນໄມ້ ຕໍ່າສຸດ-ສູງສຸດ ທີ່ແນ່ນອນກໍານົດໄວ້ເປັນເອ ກະພາບ.

- ອຸປະກອນຮັກສາຄວາມປອດໄພທີ່ຮັບໃຊ້ເຂົ້າໃນກິດຈະກໍາຕ້ອງຄົບຖ້ວນ.

- ມີການກໍານົດອາຍຸແຂກທີ່ມາໃຊ້ບໍລິການຕໍ່າສຸດ-ສູງສຸດ ແລະ ຕ້ອງມີບ່ອນສອບຖາມເອົາຂໍ້ມູນຕ່າງໆກ່ຽວກັບພະຍາດຂອງແຂກ.

- ພະນັກງານນໍາທ່ຽວຕ້ອງໄດ້ຜ່ານການຝຶກອົບຮົມ, ມີປະຫວັດບ້ານຢູ່ອັນຈະແຈ້ງ ເພື່ອສະດວກໃນການຕິດ ຕາມ.

- ລາຄາຕ້ອງຈະແຈ້ງ ແລະ ຕິດໂຊໃສ່ກະດານໃຫ້ແຂກເຫັນແຕ່ລະຈຸດຕ້ອງມີລາຄາເອກະພາບບໍ່ໃຫ້ຫຼຸດລື່ນກັນຫຼາຍຈົນເກີນໄປ.

ນອກຈາກນັ້ນ, ພາກລັດຂອງພວກເຮົາໃນແຕ່ລະຂະແໜງການທີ່ກ່ຽວຂ້ອງຕ້ອງໄດ້ເອົາໃຈໃສ່ກວດກາຕິດຕາມເຖິງສິດ ແລະ ພາລະບົດບາດຂອງຕົນ ວ່າກິດຈະກໍາດັ່ງ ກ່າວເຫຼົ່ານັ້ນສາມາດຄຸ້ມຄອງຖືກຕ້ອງຕາມນິຕິກໍາ, ຕາມລະບຽບກົດໝາຍຂອງບ້ານເມືອງແລ້ວ ຫຼື ບໍ່ ແລະ ສາມາດຄຸ້ມຄອງບັນດານັກທຸລະກິດກໍ່ຄືຜູ້ປະກອບການໃຫ້ປະຕິບັດຕາມແນວທາງນະໂຍບາຍຂອງພັກ-ລັດ ກໍ່ຄືລະບຽບກົດໝາຍ. ຖ້າພາກລັດເຮົາຄຸ້ມຄອງໄດ້ຈຶ່ງຈະເຮັດໃຫ້ກິດຈະກໍາການທ່ອງທ່ຽວຕ່າງໆທີ່ຢູ່ໃນເມືອງວັງວຽງມີຄວາມປອດໄພ ແລະ ມີຄວາມຍືນຍົງຍາວນານ (ເພັດສະໄໝ ແກ້ວກະເສີມສຸກ ຫົວໜ້າກອງຕໍາຫຼວດທ່ອງທ່ຽວແຂວງວຽງຈັນປະຈໍາເມືອງວັງວຽງ ສໍາພາດຄັ້ງວັນທີ 16/05/2018).

ພາກລັດ ຫຼື ໜ່ວຍງານທີ່ກ່ຽວຂ້ອງ ຄວນມີການດໍາເນີນການສຶກສາ ແລະ ພິຈາລະນາອອກກົດໝາຍ ຫຼື ລະ ບຽບການຕ່າງໆ ໃຫ້ຄວບຄຸມບັນດາກິດຈະກໍາສ່ຽງໄພໃຫ້ໄວທີ່ສຸດ ເນື່ອງຈາກໃນປະຈຸບັນນີ້ມີກິດຈະກໍາທ່ອງທ່ຽວແບບພະຈົນໄພເກີດຂຶ້ນຫຼາຍກິດຈະກໍາ ໂດຍສະເພາະແມ່ນກິດຈະກໍາຂີ່ສະລິງ, ປີນຜາ, ຂີ່ບາລູນ ແລະ ຂີ່ພາລາມໍເຕີ ທີ່ເລີ່ມໄດ້ຮັບຄວາມນິຍົມນັບມື້ນັບຫຼາຍຂຶ້ນ. ນອກນັ້ນກໍ່ຄວນມີລະບຽບໃນການຕິດຕາມກວດກາຄື:

1) ການກໍ່ສ້າງ ຫຼື ສ້ອມແປງສະລິງ ຕ້ອງໄດ້ຮັບອະນຸຍາດຈາກຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງເສຍກ່ອນຈຶ່ງສາມາດລົງມືກໍ່ສ້າງໄດ້, ການຕິດຕັ້ງ ຫຼື ສ້ອມແປງໃນທຸກໆຄັ້ງ ຕ້ອງໄດ້ມີວິຊາການຈາກຫ້ອງການ ຍທຂ ເມືອງລົງຕິດຕາມນໍາທຸກໆຄັ້ງ.

2) ຕ້ອງໃຫ້ພະນັກງານລັດທີ່ກ່ຽວຂ້ອງລົງກວດກາຕິດຕາມນໍາຜູ້ປະກອບການຢ່າງໜ້ອຍສອງເດືອນ/ຄັ້ງ ແລະ ມີການລົງກວດສອບອຸປະກອນຕ່າງໆຮ່ວມກັນຂອງຄະນະກໍາມະການຂັ້ນເມືອງເປັນປະຈໍາທຸກປີ.

3) ກໍານົດໃຫ້ມີມາດຕະການຈັດລະບົບຄວາມປອດໄພເພື່ອຮອງຮັບແຂກ ເປັນຕົ້ນແມ່ນໃຫ້ມີປ້າຍຫ້າມ-ປ້າຍບອກວິທີໃຊ້, ຂໍ້ແນະນໍາຕ່າງໆ, ມີເຄື່ອງໝາຍເຕືອນ, ມີປ້າຍລະບຸຈໍານວນຄົນທີ່ສາມາດຂີ່ສະລິງໄດ້ໃນແຕ່ລະຄັ້ງ. ນອກຈາກນີ້ ຕ້ອງຈັດໃຫ້ມີລະບົບປ້ອງກັນໄພສຸກເສີນ ໄດ້ແກ່ລະບົບສັນຍານແຈ້ງເຫດອັດຕະໂນມັດທີ່ສາມາດສົ່ງສຽງ ຫຼື ສັນຍານ ເມື່ອເກີດເຫດຜິດປົກກະຕິໃຫ້ຜູ້ຄວບຄຸມຮັບຮູ້ ແລະ ຕ້ອງມີອຸປະກອນຊ່ວຍເຫຼືອຄົນຈາກທີ່ສູງ.

## 4. ວິພາກຜົນ

ກ່ອນການສ້າງຕັ້ງກິດຈະກໍາຂີ່ສະລິງ ຜູ້ປະກອບການໄດ້ມີການວາງແຜນເປັນແຕ່ລະຂັ້ນຕອນ ເລີ່ມຈາກການເບິ່ງທ່າແຮງຕະຫຼາດນັກທ່ອງທ່ຽວຕ່າງປະເທດກ່ຽວກັບການທ່ອງທ່ຽວພະຈົນໄພ, ແລ້ວລົງສໍາຫຼວດຊອກຫາພື້ນທີ່ທີ່ເໝາະສົມ ຖ້າຫາກເປັນສະຖານທີ່ທ່ອງທ່ຽວທີ່ມີນັກທ່ອງທ່ຽວໄປທ່ຽວຫຼາຍຍິ່ງເປັນການດີ, ເມື່ອສ້າງຕັ້ງກິດຈະກໍາສະລິງສໍາເລັດແລ້ວ ກໍ່ຝຶກຊ້ອມພະນັກງານນໍາທ່ຽວໃຫ້ມີຄວາມຊໍານານໃນການນໍາທ່ຽວສະລິງ ພ້ອມທັງບໍລິການໄປໃນໂຕ. ໃນການວາງແຜນຜູ້ປະກອບການທຸກຄົນແມ່ນບໍ່ມີປະສົບການໃນກິດຈະກໍາດັ່ງກ່າວນີ້ ເຮັດໄປຕາມຄວາມຮັບຮູ້ຂອງຕົນເອງ ເຮັດໃຫ້ພົບຄວາມຫຍຸ້ງຍາກລໍາບາກໃນເບື້ອງຕົ້ນ ແຕ່ເມື່ອເຮັດດົນໄປກໍ່ເຮັດໃຫ້ເລີ່ມມີຄວາມຊໍານານຂຶ້ນເທື່ອລະກ້າວ. ເຖິງຈັ່ງໃດກໍ່ຕາມໃນການດໍາເນີນກິດຈະກໍາດັ່ງກ່າວ ເພື່ອໃຫ້ເກີດປະສິດທິພາບຂອງການ

ບໍລິຫານ ແລະ ເປັນໄປຕາມຫຼັກວິທະຍາສາດ ມີຄວາມຈຳເປັນຕ້ອງມີການວາງແຜນ ເຊິ່ງສອດຄ່ອງກັບແນວຄວາມຄິດຂອງ Schermahorn (2003: 7) ໄດ້ກ່າວໄວ້ວ່າ: ການຈັດການຄືຂະບວນການເຮັດວຽກທີ່ປະ ກອບດ້ວຍການວາງແຜນ, ການຈັດບຸກຄະລາກອນ, ການນຳໃຊ້ ແລະ ການຄວບຄຸມຊັບ ພະຍາກອນທີ່ອົງກອນມີຢູ່ ໂດຍໃຫ້ສອດຄ່ອງກັບຈຸດປະສົງ ແລະ ເປົ້າໝາຍເພື່ອໃຫ້ການປະຕິບັດວຽກງານບັນລຸຕາມເປົ້າໝາຍທີ່ວາງໄວ້ຢ່າງມີປະສິດທິພາບ ແລະ ມີປະສິດທິຜົນສູງ.

ໜ່ວຍບໍລິການສະລິງໂດຍພື້ນຖານຈະປະກອບມີ 4 ໜ່ວຍງານຫຼັກຄື: ໜ່ວຍງານບໍລິຫານ-ການເງິນ, ໜ່ວຍງານຮັບຕ້ອນ, ໜ່ວຍງານນຳພາຂີ່ສະລິງ ແລະ ໜ່ວຍງານອະນາໄມ ເຊິ່ງມີເຈົ້າຂອງໜ່ວຍບໍລິການສະລິງເປັນຜູ້ຊີ້ນຳສູງສຸດ, ໃນແຕ່ລະໜ່ວຍງານແມ່ນມີຄວາມຮັບຜິດຊອບຂອງໃຜລາວ ແຕ່ມີການພົວພັນກັນຢູ່ຕະຫຼອດເວລາ. ຜູ້ປະກອບການໄດ້ໃຫ້ຄວາມສຳຄັນຢ່າງຍິ່ງໃນການຈັດອົງກອນ ເພື່ອທີ່ຈະເຮັດໃຫ້ທຸລະກິດບັນລຸຜົນສຳເລັດຕາມເປົ້າໝາຍທີ່ໄດ້ຕັ້ງໄວ້ ເຊິ່ງເຫັນວ່າມີຄວາມສອດຄ່ອງກັບແນວຄວາມຄິດຂອງ ສົມຄິດ ບາງໂມ (2548:62-63) ໄດ້ກ່າວເຖິງການຈັດການກິດຈະການຕ່າງໆຈຳເປັນຕ້ອງມີຊັບພະຍາກອນອັນເປັນພື້ນຖານທາງການຈັດການ ໂດຍທົ່ວໄປຖືວ່າຊັບພະຍາກອນທີ່ເປັນປັດໄຈສຳຄັນຂອງການຈັດການມີຢູ່ 4 ປະການ ເຊິ່ງຈັດຢູ່ໃນນາມຂອງ 4M ໄດ້ ແກ່: ຄົນ (Man) ເປັນຜູ້ປະຕິບັດກິດຈະກຳນັ້ນໆ, ເງິນ (Money) ໃຊ້ສຳລັບເປັນຄ່າຈ້າງ ຫຼື ຄ່າໃຊ້ຈ່າຍໃນການດຳເນີນງານ, ວັດຖຸສິ່ງຂອງ ຫຼື ວັດຖຸອຸປະກອນ (Materials) ໝາຍເຖິງອຸປະກອນເຄື່ອງໃຊ້ເຄື່ອງມືຕ່າງໆລວມທັງອາຄານສະຖານທີ່ດ້ວຍ, ການຈັດການ (Management) ໝາຍເຖິງຄວາມຮູ້ກ່ຽວກັບການຈັດການ ປັດໄຈໃນການບໍລິຫານທັງ 4 ປະການນີ້ເປັນສິ່ງຈຳເປັນສຳລັບການຈັດການ ເພາະປະສິດທິພາບ ແລະ ປະສິດທິຜົນຂອງການຈັດການຂຶ້ນຢູ່ກັບຄວາມສົມບູນ ແລະ ຄຸນະພາບຂອງປັດໄຈດັ່ງກ່າວນີ້.

ໃນການຈັດກິດຈະກຳຂີ່ສະລິງແມ່ນມີຂັ້ນຕອນນັບແຕ່ການໃຫ້ຂໍ້ມູນແກ່ນັກທ່ອງທ່ຽວຢູ່ຈຸດບໍລິການຂາຍປີ້ ແລ້ວນຳພານັກທ່ອງທ່ຽວໄປຍັງຈຸດຂີ່ສະລິງ ກ່ອນຂຶ້ນຂີ່ສະລິງຕ້ອງໄດ້ໃສ່ຊຸດອຸປະກອນຮັກສາຄວາມປອດໄພຄົບຊຸດ ພ້ອມທັງກວດເຊັກອຸປະກອນໄປໃນຕົວ ຫຼັງຈາກນັ້ນກໍ່ທົດລອງຂີ່ສະລິງຢູ່ພາກພື້ນດິນ ເຊິ່ງຈະມີພະນັກງານນຳທ່ຽວເປັນຜູ້ອະທິບາຍວິທີການ, ສິ່ງທີ່ຄວນເຮັດ, ສິ່ງທີ່ບໍ່ຄວນເຮັດ, ຄວນລະມັດລະວັງ ແລະ ຂໍ້ຫ້າມຕ່າງໆ. ໃນການຂີ່ສະລິງກໍ່ຈະມີພະນັກງານນຳທ່ຽວເປັນຜູ້ນຳພາໃນການຂີ່ ພະນັກງານນຳທ່ຽວ 2 ທ່ານ ຮັບຜິດຊອບແຂກ 3 ທ່ານ ພະນັກງານນຳທ່ຽວຈະເປັນຜູ້ນຳພາແຕ່ເລີ່ມຕົ້ນຈົນສິ້ນສຸດກິດຈະກຳ. ຜູ້ປະກອບການໄດ້ເອົາໃຈໃສ່ໃນການບໍລິການ ເພື່ອອຳນວຍຄວາມສະດວກໃຫ້ແກ່ແຂກຜູ້ທີ່ມາໃຊ້ບໍລິການ ເປັນຕົ້ນແມ່ນການໃຫ້ຂໍ້ມູນຂ່າວສານ, ການແນະນຳລາຍລະອຽດການທ່ອງທ່ຽວຕ່າງໆ, ມີລົດຮັບ-ສົ່ງຈາກທີ່ພັກຫາຈຸດບໍລິການ, ມີພະນັກງານທຳທ່ຽວຄອຍແນະນຳ ແລະ ຊ່ວຍເຫຼືອຢູ່ຕະຫຼອດເວລາ, ໃນສະຖານທີ່ຈຸດບໍລິການກໍ່ມີສະຖານທີ່ພັກເຊົາທີ່ກວ້າງຂວາງ ເຊິ່ງມີການບໍລິການອາຫານ-ເຄື່ອງດື່ມໄວ້ບໍລິການນັກທ່ອງທ່ຽວ, ມີຫ້ອງນ້ຳທີ່ສະອາດ ແລະ ມີບ່ອນເກັບມ້ຽນເຄື່ອງທີ່ບໍ່ຈຳເປັນໃນການຂີ່ສະລິງໄວ້ໃຫ້ແຂກຈາກການບໍລິການເຊິ່ງເຫັນວ່າມີຄວາມສອດຄ່ອງກັບແນວຄວາມຄິດຂອງ ບຸນເລີດ ຈິດຕັ້ງວັດທະນາ (2542:108-109) ທຸລະກິດທ່ອງທ່ຽວຫມາຍເຖິງ ການດຳເນີນທຸລະກິດໃຫ້ບໍລິການທ່ອງທ່ຽວແກ່ນັກທ່ອງທ່ຽວ ເພື່ອຕອບສະໜອງຄວາມຕ້ອງການຂອງນັກທ່ອງທ່ຽວ ເຮັດໃຫ້ນັກທ່ອງທ່ຽວເກີດຄວາມພໍໃຈ ໂດຍຫວັງຈະໄດ້ຮັບຜົນກຳໄລຈາກການດຳເນີນທຸລະກິດເປັນສິ່ງຕອບແທນ ເຊິ່ງການບໍລິການທ່ອງທ່ຽວນັ້ນໝາຍເຖິງການບໍລິການສະຖານທີ່ຮອງຮັບ ເພື່ອໃຫ້ຄວາມສະດວກສະບາຍ ແລະ ບັນເທີງແກ່ນັກທ່ອງທ່ຽວ ຖືເປັນອຸທານການທ່ອງທ່ຽວ (Tourism Supply) ເຊິ່ງໃນບາງໂອກາດກໍເປັນຕົວດຶງດູດຈິດໃຈໃຫ້ເກີດການທ່ອງທ່ຽວ.

ຜູ້ປະກອບການໄດ້ເອົາໃຈໃສ່ໃນການຈັດການລະບົບຄວາມປອດໄພເປັນພິເສດ ເພື່ອຮັບປະກັນໃນການບໍລິການແກ່ນັກທ່ອງທ່ຽວ, ມີການກວດເຊັກຈຸດຍຶດຕ່າງໆ ອຸປະກອນຮັບໃຊ້ໃນການຂີ່ສະລິງ ຖານພັກເທິງຕົ້ນໄມ້ ສາຍສະລິງຢ່າງເປັນປະຈຳ ຖ້າຫາກເຫັນວ່າມີການຫຼຸຍຫ້ຽນແມ່ນຈະປ່ຽນອອກທັນທີ. ໃນການຫຼິ້ນກິດຈະກຳໃນທຸກໆຄັ້ງກໍ່ຈະມີພະນັກງານນຳທ່ຽວນຳພາທຸກໆຄັ້ງ ນັບແຕ່ເລີ່ມຕົ້ນຈົນສິ້ນສຸດກິດຈະກຳ, ຖ້າຫາກໃນກໍລະນີເກີດອຸ ບັດຕິເຫດເລັກໜ້ອຍໄກ້ທຳທ່ຽວກໍ່ຈະເປັນຜູ້ປິ່ນປົວໃຫ້ແຂກ ໂດຍມີເຄື່ອງປະຖົມພະຍາບານຂັ້ນຕົ້ນປະຈຳໄວ້ໃນຈຸດບໍລິການ ແຕ່ຖ້າຫາກເປັນກໍລະນີຮ້າຍແຮງແມ່ນຈະໄດ້ເອົາລົດນຳສົ່ງໂຮງໝໍເມືອງຢ່າງທັນການ. ເຊິ່ງມີຄວາມສອດຄ່ອງກັບ ບໍລິສັດຄຳແພລນນິ່ງແອນດີເວີລອບເມັນຈຳກັດ (ມະຫາຊົນ) (2546: 3-11) ໄດ້ໃຫ້ຄວາມໝາຍຂອງການທ່ອງທ່ຽວພະຈົນໄພ (Adventure Tourism) ວ່າຕີຄວາມໝາຍຫຼາກຫຼາຍແຕກຕ່າງກັນໄປ ໂດຍສາມາດໃຫ້ຄຳຈຳກັດຄວາມໄດ້ວ່າ ເປັນການທ່ອງທ່ຽວທີ່ຕື່ນເຕັ້ນ ແລະ ທ້າທາຍ ໂດຍການຄວບຄຸມຄວາມສ່ຽງໄພ ເຊິ່ງສ່ວນຫຼາຍມັກຈັດໃນພື້ນທີ່ທີ່ຫ່າງໄກ ເປັນກິດຈະກຳທີ່ເຮັດໃຫ້ນັກເດີນທາງໄດ້ຟື້ນຟູຮ່າງກາຍ ແລະ ຈິດວິນຍານ ທັງນີ້ຕ້ອງມີການຈັດການໂດຍຜູ້ຊ່ຽວຊານທີ່ມີຄວາມຮັບຜິດຊອບຕໍ່ສຸຂະພາບຄວາມປອດໄພໃນຊີວິດ ແລະ ຊັບສິນຂອງຜູ້ຮ່ວມກິດຈະກຳ.

ທາງດ້ານການຄວບຄຸມກວດກາປະເມີນຜົນ ຜູ້ປະກອບການ

ໄດ້ມີການຄວບຄຸມທາງດ້ານຄວາມປອດໄພຂອງອຸປະກອນຮັບໃຊ້ໃນການຂີ່ສະລິງຕ່າງໆ ເປັນຕົ້ນແມ່ນຊຸດຂີ່ສະລິງ, ຖານພັກເທິງຕົ້ນໄມ້, ຈຸດຢຶດຕ່າງໆ ແລະ ສາຍສະລິງ ໄດ້ມີການກວດກາຢູ່ເປັນປະຈຳ ໂດຍມີການປະເມີນຜົນວ່າໂຕໃດຄວນທີ່ຕ້ອງປ່ຽນອອກ ແລະ ໂຕໃດທີ່ຕ້ອງໄດ້ປັບປຸງຄືນ. ນອກຈາກນັ້ນ ຍັງມີການຄວບຄຸມທາງດ້ານບັນຊີລາຍຮັບ-ລາຍຈ່າຍ, ດ້ານລາຄາຂອງການບໍລິການ, ດ້ານຄວາມປອດໄພໃນການບໍລິການ ແລະ ການຮັກສາສິ່ງແວດລ້ອມ ໂດຍມີການປະເມີນຜົນເປັນໄລຍະ. ແນວທາງການຈັດການຂອງຫົວໜ່ວຍທຸລະກິດແມ່ນຜູ້ປະກອບການໄດ້ເນັ້ນໃສ່ດ້ານຄວາມປອດໄພເປັນຫຼັກການສ້າງຕັ້ງສະລິງ ແລະ ອຸປະກອນຮັບໃຊ້ຕ່າງໆ ຕ້ອງໄດ້ມາດຕະຖານເລື່ອງຄວາມປອດໄພທີ່ສາກົນຍອມຮັບ, ຕໍ່ມາແມ່ນດ້ານບຸກຄະລາກອນແມ່ນນໍາໃຊ້ຄົນໃນທ້ອງຖິ່ນນັ້ນ ແລະ ຕ້ອງໄດ້ມີການຝຶກທັກສະໃນການນໍາທ່ຽວສະລິງຢູ່ເປັນປະຈໍາ ພ້ອມທັງຕ້ອງໄດ້ເຂົ້າຝຶກອົບຮົມການປະຖົມພະຍາບານຂັ້ນຕົ້ນ, ການປະຊາສໍາພັນກິດຈະກໍາດັ່ງກ່າວຕາມສື່ອອນລາຍຕ້ອງໃຫ້ຫຼາກຫຼາຍຂຶ້ນກວ່າເກົ່າ ແລະ ທັງເປັນເຈົ້າການໃນການອະນຸຮັກສິ່ງແວດລ້ອມ. ເຊິ່ງມີຄວາມສອດຄ່ອງກັບ ໂຍທິນ ຈັນທະວີ (2548) ການທ່ອງທ່ຽວເປັນກິດຈະກໍາທາງເສດຖະກິດ, ເປັນເຄື່ອງມືທີ່ອໍານວຍໃຫ້ມີການປ່ຽນແປງພື້ນທີ່ໄດ້ຢ່າງດີ, ຖ້າຫາກວ່າການທ່ອງທ່ຽວຫາກມີການຈັດການ ແລະ ບໍລິຫານທີ່ດີ ກໍ່ຈະສາມາດໃຊ້ພື້ນທີ່ທີ່ເປັນຊັບພະຍາກອນນັ້ນໄດ້ໂດຍບໍ່ໄດ້ເຮັດໃຫ້ມັນເຊື່ອມໂຊມລົງ, ການພັດທະນາການທ່ອງທ່ຽວໃຫ້ມີຄວາມຍືນຍົງນັ້ນຈໍາເປັນຕ້ອງມີການວາງແຜນນະໂຍບາຍທີ່ຊັດເຈນ, ມີຄວາມສອດຄ່ອງກັບຄວາມຄິດເຫັນ ແລະ ເຫດຜົນຂອງຄົນໃນທ້ອງຖິ່ນ ເພື່ອໃຫ້ມີການສົ່ງເສີມກ້າວຂຶ້ນສູ່ລະດັບປະເທດ, ນະໂຍບາຍຄວນຈະເຈາະຈົງລົງໃນແຕ່ລະດ້ານ ໂດຍພິຈາລະນາປັດໄຈທີ່ສໍາຄັນພື້ນຖານຂອງຊຸມຊົນ, ຖ້າເປັນໄປໄດ້ກໍຄວນໃຫ້ມີການແຂ່ງຂັນເພື່ອເພີ່ມຈຸດຂາຍໃນຕະຫຼາດ, ການສ້າງແນວທາງການຈັດການສິ່ງແວດລ້ອມ ໃຫ້ມີການນໍາໃຊ້ຊັບພະຍາກອນແບບຍືນຍົງຕະຫຼອດໄປ ແລະ ຕ້ອງບໍ່ກີດກັ້ນການມີສ່ວນຮ່ວມຂອງປະຊາຊົນໃນພື້ນທີ່.

## 5. ສະຫຼຸບ

ການວາງແຜນກ່ອນການສ້າງຕັ້ງສະລິງຂອງຜູ້ປະກອບການເບື້ອງຕົ້ນແມ່ນການສໍາຫຼວດວ່ານັກທ່ອງທ່ຽວດ້ານກິດຈະກໍາດັ່ງກ່າວນີ້ຢູ່ຕ່າງປະເທດມີໜ້ອຍຫຼາຍປານໃດ ແລະ ເບິ່ງຄ່ານິຍົມໃນປະຈຸບັນ ແລະ ໃນອະນາຄົດວ່າຈະເພີ່ມຂຶ້ນ ຫຼື ບໍ່, ຫຼັງຈາກນັ້ນແມ່ນການລົງສໍາຫຼວດເບິ່ງພື້ນທີ່ທີ່ເໝາະສົມ ຈຸດທີ່ມີວິວທິວທັດທໍາມະຊາດທີ່ສວຍສົດງົດງາມເໝາະແກ່ການສ້າງຕັ້ງສະລິງ ແລະ ຖ້າເປັນສະຖານທີ່ທ່ອງທ່ຽວທີ່ມີຊື່ສຽງ ມີນັກທ່ອງທ່ຽວເຂົ້າໄປທ່ຽວຊົມຫຼາຍໃນແຕ່ລະມື້ຍິ່ງເປັນການດີ, ຫຼັງຈາກຮູ້ຈັກພື້ນທີ່ແລ້ວ ຄ່ອຍລົງໄປສໍາຫຼວດສະຖານທີ່ດັ່ງກ່າວນັ້ນ ວ່າຈະສາມາດສ້າງຕັ້ງສະລິງໄດ້ບໍ່ເມື່ອເຫັນວ່າມີຄວາມເປັນໄປໄດ້ແລ້ວກໍລົງມືກໍ່ສ້າງ ເມື່ອສ້າງຕັ້ງກິດຈະກໍາຂີ່ສະລິງສໍາເລັດແລ້ວກໍ່ຝຶກຊ້ອມເອົາພະນັກງານນໍາພາຂີ່ສະລິງໃຫ້ມີຄວາມຊໍານານໃນການນໍາພາຂີ່ສະລິງ, ການຮັກສາຄວາມປອດໄພ ແລະ ການກວດເຊັກອຸປະກອນຕ່າງໆ ພ້ອມດຽວກັນນັ້ນກໍ່ເຮັດການໂຄສະນາຕາມສື່ຕ່າງໆໄປຄຽງຄູ່ກັນ. ໃນການວາງແຜນ ແລະ ການຈັດຕັ້ງປະຕິບັດຕົວຈິງ ເຫັນວ່າຜູ້ປະກອບການແມ່ນບໍ່ມີຄວາມຮູ້ ແລະ ປະສົບການໃນດ້ານກິດຈະກໍາດັ່ງກ່າວນີ້ມາກ່ອນ ມີແຕ່ເຮັດໄປຕາມຄວາມເຂົ້າໃຈຂອງຕົນເອງ ເຊິ່ງມີບາງອັນທີ່ແທດເໝາະ ແລະ ບາງອັນກໍ່ຍັງບໍ່ແທດເໝາະ ແຕ່ກໍ່ຖືເອົາການຮຽນຮູ້ໄປໃນໂຕເຮັດໄປພ້ອມປັບປຸງໄປພ້ອມ ເລີ່ມຈາກທີ່ບໍ່ມີປະສົບການເລີຍ ກໍ່ເລີ່ມມີປະສົບການຫຼາຍຂຶ້ນໃນປະຈຸບັນນີ້.

ການຈັດອົງກອນຂອງໜ່ວຍບໍລິການສະລິງ ເຫັນວ່າມີຢູ່ 4 ໜ່ວຍງານຫຼັກ ແລະ ການເຮັດວຽກກໍ່ພົວພັນກັນຢູ່ຕະຫຼອດຄື: ໜ່ວຍງານບໍລິຫານ-ການເງິນ, ໜ່ວຍງານຮັບຕ້ອນ, ໜ່ວຍງານນໍາພາຂີ່ສະລິງ ແລະ ໜ່ວຍງານອະນາໄມ ທັງ 4 ໜ່ວຍງານນີ້ແມ່ນເຈົ້າຂອງໜ່ວຍບໍລິການສະລິງເປັນຫົວໜ້າ ພ້ອມທັງເປັນຜູ້ຊີ້ນໍາຫຼັກ, ຮອງລົງມາແມ່ນຮອງຜູ້ທີໜຶ່ງ. ການບໍລິຫານຈັດການແມ່ນເຮັດແບບຄອບຄົວຕາມຄວາມຮັບຮູ້ຂອງຕົນເອງ ເຮັດໄປພ້ອມຮຽນຮູ້ໄປພ້ອມເພາະເຈົ້າຂອງທຸລະກິດ ຫຼື ພະນັກງານບໍລິຫານ ແມ່ນຈົບສາຍພາສາອັງກິດມາເປັນສ່ວນໃຫຍ່ ເລີຍຂາດຄວາມຮູ້ດ້ານການບໍລິຫານຈັດການທີ່ເປັນລະບົບ.

ການຈັດກິດຈະກໍາຂີ່ສະລິງແມ່ນສາມາດເຊື່ອມຈອດກັບກິດຈະກໍາອື່ນໄດ້ ໂດຍມີການລວມຢູ່ໃນໂປຼແກຣມທ່ອງທ່ຽວອັນດຽວກັນ ຫຼື ແຍກຈາກໂປຣແກຣມກໍ່ໄດ້ ໃນການຈັດກິດຈະກໍາຂີ່ສະລິງແມ່ນເລີ່ມຈາກການໃຫ້ຂໍ້ມູນແກ່ນັກທ່ອງທ່ຽວຜູ້ທີ່ມີຄວາມສົນໃຈຢູ່ໃນຈຸດບໍລິການຂາຍປີ້ ຫຼັງຈາກນັ້ນແມ່ນນໍາ ພາແຂກໄປຍັງຈຸດບໍລິການສະລິງເພື່ອນໍາພາຂີ່ສະລິງ ກ່ອນຂຶ້ນຂີ່ສະລິງນັກທ່ອງທ່ຽວຕ້ອງໄດ້ລົງທະບຽນ ແລ້ວໃສ່ຊຸດຂີ່ສະລິງທີ່ມີອຸປະກອນປ້ອງກັນຄົບຊຸດ ເມື່ອໃສ່ຊຸດພ້ອມທັງກວດເຊັກເບິ່ງອຸປະກອນປ້ອງກັນຄົບຊຸດແລ້ວ ກໍ່ໄປຍັງຈຸດທົດລອງຂີ່ສະລິງຢູ່ພາກພື້ນດິນເພື່ອທົດລອງຂີ່ ແລະ ຮັບຄໍາແນະນໍາຕ່າງໆຈາກພະນັກງານນໍາທ່ຽວ ເມື່ອມີຄວາມພ້ອມແລ້ວກໍ່ຂຶ້ນຂີ່ສະລິງຕົວຈິງ ເຊິ່ງໃນການຂີ່ແມ່ນມີພະນັກງານນໍາທ່ຽວນໍາພາແຕ່ເລີ່ມຕົ້ນຈົນສິ້ນສຸດກິດຈະກໍາ. ອຸປະກອນຮັບໃຊ້ໃນການຂີ່ສະລິງ, ສິ່ງອໍານວຍຄວາມສະດວກ, ຂັ້ນຕອນກະກຽມກ່ອນການຂີ່ຈົນເຖິງການນໍາພາຂີ່ສະລິງຈົນສິ້ນສຸດກິດຈະກໍາ ເຫັນວ່າເປັນໄປຕາມມາດຕະຖານຂອງສາກົນທີ່ນໍາໃຊ້ຢູ່ໃນປະຈຸບັນນີ້ ແຕ່ສິ່ງທີ່

ຍັງເປັນຈຸດອ່ອນແມ່ນຂາດວິຊາການຜູ້ມີຄວາມຮູ້ດ້ານການປະເມີນການຫຼຸຍຫ້ຽນຂອງການໃຊ້ງານອຸປະກອນຕ່າງໆ, ວິຊາການທີ່ມີຄວາມຮູ້ສະເພາະດ້ານໃນການຈັດການການທ່ອງທ່ຽວ ແລະ ການໂຄສະນາຕາມສື່ຕ່າງໆອັນຫຼາກຫຼາຍ ເຮັດໃຫ້ການຈັດການໃນກິດຈະກໍາຂີ່ສະລິງຍັງຕ້ອງໄດ້ມີການພັດທະນາຂຶ້ນເລື້ອຍໆ ເພື່ອໃຫ້ທຽບທັນກັບສາກົນ.

ການອໍານວຍຄວາມສະດວກໃນການໃຫ້ບໍລິການ ເລີ່ມຈາກສິ່ງອໍານວຍຄວາມສະດວກຂອງຮັບໃນພື້ນທີ່ບໍລິການ ແມ່ນມີບ່ອນນັ່ງລໍຖ້າຂີ່ສະລິງ ຫຼື ບ່ອນນັ່ງພັກຜ່ອນສໍາລັບຜູ້ທີ່ຫຼິ້ນກິດຈະກໍາສໍາເລັດແລ້ວ ເຊິ່ງມີການບໍລິການອາຫານ, ມີຫ້ອງນໍ້າທີ່ສະອາດ ແລະ ມີບ່ອນເກັບມ້ຽນເຄື່ອງທີ່ບໍ່ຈໍາເປັນໃຫ້ກັບແຂກ. ນອກຈາກນັ້ນກໍ່ມີພະນັກງານຮັບຕ້ອນເປັນຜູ້ແນະນໍາລາຍລະອຽດຂອງກິດຈະກໍາຂີ່ສະລິງ, ສາທິດວິທີໃນການຂີ່ສະລິງ ແລະ ນໍາພາຂີ່ສະລິງຈົນສິ້ນສຸດກິດຈະກໍາ ແລ້ວກໍ່ມີລົດຮັບ-ສົ່ງເຖິງສະຖານທີ່ພັກແຮມ. ແຕ່ການອໍານວຍຄວາມສະດວກໃນບາງຄັ້ງແມ່ນຍັງຫຼ້າຊ້າ ເປັນຕົ້ນແມ່ນການໄປຮັບແຂກຕາມສະຖານທີ່ພັກ, ການແນະນໍາຂໍ້ມູນຍັງບໍ່ທົ່ວເຖິງແຂກຍ້ອນຈໍານວນພະນັກງານທີ່ເກັ່ງພາສາອັງກິດ ຫຼື ພາສາສາກົນອື່ນໆຍັງມີຈໍານວນໜ້ອຍບໍ່ພຽງພໍກັບຈໍານວນແຂກ.

ການຈັດການລະບົບຄວາມປອດໄພ ເຫັນວ່າຜູ້ປະກອບການໄດ້ເອົາໃຈໃສ່ໃນດ້ານນີ້ເປັນພິເສດ ເປັນຕົ້ນແມ່ນອຸປະກອນຮັບໃຊ້ໃນການຂີ່ສະລິງແມ່ນມີພະນັກງານຄອຍກວດສອບຢູ່ຢ່າງເປັນປະຈໍາ, ນອກຈາກນັ້ນຖານພັກເທິງຕົ້ນໄມ້, ສາຍສະລິງແມ່ນໄດ້ມີການປ່ຽນອອກເມື່ອເຫັນວ່າສາຍມີການຝຸ່ຍອອກເລັກໜ້ອຍ, ໃນສະຖານທີ່ຍັງມີປ້າຍຊີ້ບອກປ້າຍເຕືອນຕ່າງໆໄວ້ແນະນໍາແຂກ, ໃນການຫຼິ້ນກິດຈະກໍາດັ່ງກ່າວກໍ່ມີພະນັກງານນໍາທ່ຽວເປັນຜູ້ນໍາພາຫຼິ້ນກິດຈະກໍາໃນທຸກໆຄັ້ງ ແລະ ຖ້າຫາກເກີດອຸບັດຕິເຫດເລັກໜ້ອຍແມ່ນມີເຄື່ອງປະຖົມພະຍາບານເບື້ອງຕົ້ນໄວ້ປິ່ນປົວແຂກ ຫຼື ຖ້າກໍລະນີຮ້າຍແຮງກໍ່ແມ່ນມີລົດຮັບສົ່ງໂຮງໝໍຢ່າງທ່ວງທັນກັບເວລາ.

ການຄວບຄຸມ ແມ່ນໄດ້ຄວບຄຸມທາງດ້ານລາຄາຂອງການບໍລິການສະລິງຂອງແຕ່ລະໜ່ວຍບໍລິການໃຫ້ມີລາ ຄາໃກ້ຄຽງກັນ ບໍ່ໃຫ້ແຂ່ງຂັນກັນລົງລາຄາ, ນອກນັ້ນ ຜູ້ປະກອບການຍັງໄດ້ຄວບຄຸມທາງດ້ານສິ່ງແວດລ້ອມ ເປັນ ຕົ້ນແມ່ນການເກັບມ້ຽນຂີ້ເຫຍື້ອ, ການຮັກສາສະພາບແວດລ້ອມ ພ້ອມທັງເປັນເຈົ້າການປຸກລະດົມປະຊາຊົນໃນຂອບເຂດດັ່ງກ່າວໃຫ້ເປັນເຈົ້າການຮ່ວມກັນໃນການປົກປັກຮັກສາສິ່ງແວດລ້ອມ, ການຄວບຄຸມດ້ານຄວາມປອດໄພໃນການໃຫ້ບໍລິການ, ດ້ານອຸປະກອນຮັບໃຊ້ໃນການບໍລິການຕ່າງໆ ແລະ ຄວບຄຸມທາງດ້ານບັນຊີລາຍຮັບ-ລາຍຈ່າຍ ໂດຍມີການກວດກາປະເມີນຜົນເປັນໄລຍະ ເພື່ອຕິດຕາມກວດກາຢ່າງໃກ້ຊິດ.

ໃນການຈັດການກິດຈະກໍາການທ່ອງທ່ຽວຂີ່ສະລິງ ຜູ້ປະກອບການໄດ້ຈັດກອງປະຊຸມພະນັກງານທັງໝົດຂອງໜ່ວຍບໍລິການສະລິງໃນທຸກໆເດືອນ ເພື່ອຕໍານິສິ່ງຂ່າວກັນ ແລະ ກັນ ເພື່ອປັບປຸງຈຸດອ່ອນທັງເປັນການຊອກຫາວິທີແກ້ໄຂຮ່ວມກັນ ພ້ອມທັງເປັນການແລກປ່ຽນບົດຮຽນກັນ ແລະ ກັນຂອງພະນັກງານທັງໝົດ, ມີການຝຶກອົບຮົມຖອດຖອນບົດຮຽນໃຫ້ພະນັກງານປະຈໍາ ແລະ ພະນັກງານທີ່ເຂົ້າໃໝ່ ໃຫ້ມີຄວາມສໍານຶກສໍານານໃນທຸກດ້ານຂອງການບໍລິການ, ການຊ້ອມແປງສະລິງ ລວມໄປເຖິງການພະຖົມພະຍາບານເບື້ອງຕົ້ນ. ນອກຈາກນັ້ນ ຜູ້ປະກອບການກໍ່ໄດ້ເອົາໃຈໃສ່ດ້ານຄວາມປອດໄພຂອງອຸປະກອນ ແມ່ນມີການກວດເຊັກຢ່າງເປັນປະຈໍາ, ພ້ອມດຽວກັນນັ້ນກໍ່ຍັງເປັນເຈົ້າການລະດົມໃຫ້ປະຊາຊົນໃນຂອບເຂດດັ່ງກ່າວໃນການອະນຸຮັກສິ່ງແວດລ້ອມ ເພື່ອບໍ່ໃຫ້ມີຜົນກະທົບຕໍ່ທໍາມະຊາດ, ມີການປະຊາສໍາພັນກ່ຽວກັບກິດຈະກໍາຂີ່ສະລິງຕາມສື່ອອນລາຍຕ່າງໆ ເພື່ອໃຫ້ເຂົ້າເຖິງກຸ່ມລູກຄ້າ ແລະ ຍົກລະດັບໃນການໃຫ້ບໍລິການຂອງຕົນເອງໃຫ້ນັບມື້ນັບດີຂຶ້ນຕາມລໍາດັບ.

## 6. ຂໍ້ຂັດແຍ່ງ

ພວກເຮົາ (ທີມງານນັກຄົ້ນຄວ້າ) ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດໃດໆທັງນັ້ນ, ກໍລະນີມີການລະເມີດ ໃນຮູບການໃດກໍ່ຕາມ ພວກເຮົາມີຄວາມຍິນດີ ຂໍຮັບຜິດຊອບແຕ່ພຽງຝ່າຍດຽວ.

## 7. ເອກະສານອ້າງອີງ (Reference)


ກຸ່ມໜ່ວຍບໍລິການສະລິງເມືອງວັງວຽງ. (2016). ບົດລາຍງານການເຄື່ອນໄຫວວຽກງານການໃຫ້ບໍລິການຂີ່ສະລິງ.

ກະຊວງຖະແຫຼງຂ່າວ ,ວັດທະນະທໍາ ແລະ ທ່ອງທ່ຽວ ກົມໂຄສະນາການທ່ອງທ່ຽວ. (2013). ປຶ້ມທ່ຽວທົ່ວລາວ. ຖະໜົນລ້ານຊ້າງ. ເມືອງຈັນທະບູລີ. ນະຄອນຫຼວງວຽງຈັນ. ໂທ/ແຟັກ .212248 021 www.tourismlaos.org

ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ. (2016). ວິໄສທັດ 2030. ຍຸດທະສາດຮອດປີ 2025 ແລະ ແຜນພັດທະນາວຽກງານທ່ອງທ່ຽວຂອງ ສປປ ລາວ ສໍາລັບປີ 2016 - 2020.

ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ. (2016). ແຜນຍຸດທະສາດການທ່ອງທ່ຽວ 2006 - 2020.

ສະພາແຫ່ງຊາດ. (2013) ກົດໝາຍວ່າດ້ວຍການທ່ອງທ່ຽວ ສະບັບປັບປຸງເລກທີ 32/ສພຊ, ລົງວັນທີ 24/7/2013.

ສົມຄິດ ບາງໂມ. (2548). ອົງການ ແລະ ການຈັດການ. (ພິມຄັ້ງທີ 4). ກຸງເທບ: ວິດທະຍະພັດ.

ສອນທະວີ ພິມມະໄກສອນ, ວິຊາການຈາກຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງວັງວຽງ, ໜ່ວຍງານຕິດຕາມກວດກາ ແລະ ສິ່ງແວດລ້ອມ. ສຳພາດວັນທີ 17 ພຶດສະພາ 2018.

ໂຍທິນ ຈັນທະວີ. (2548). ການຈັດການການທ່ອງທ່ຽວທາງນິເວດຂອງຊຸມຊົນເທິງພື້ນທີ່ສູງ: ກໍລະນີສຶກສາໂຄງການສະຖານີສາທິດ ແລະ ຖ່າຍທອດການກະເສດປ່າໄມ້, ສິ່ງແວດລ້ອມ ອັນເນື່ອງມາຈາກພະລາດຊະດຳຣິ. ວິທະຍານິພົນລະດັບປະລິນຍາໂທ. ມະຫາວິທະຍາໄລຊຽງໃໝ່.

ບຸນຕີ ຈັນທິລາດ, ເຈົ້າຂອງໜ່ວຍບໍລິການກຣີນວິວຊິບລາຍ. ສຳພາດຄັ້ງວັນທີ 11 ພຶດສະພາ 2018.

ບຸນທັນ ສຸວັນນະວົງ, ເຈົ້າຂອງບໍລິສັດທີຊີເຄອາເມຊິງທົວຈຳກັດ (ໜ່ວຍບໍລິການວັງວຽງພາລາໄດຊິບລາຍ). ສຳພາດຄັ້ງວັນທີ 16 ພຶດສະພາ 2018.

ບຸນເລີດ ຈິດຕັ້ງວິທະນາ. (2542). ການພັດທະນາການທ່ອງທ່ຽວແບບຍືນຍົງ. ຊຽງໃຫມ່: ຄະນະມະນຸດສາດ. ມະຫາວິທະຍາໄລຊຽງໃໝ່.

ບໍລິສັດຄໍແພລນນິ່ງແອນດີເວີລອບເມັນຈຳກັດ (ມະຫາຊົນ). (2546). ການທ່ອງທ່ຽວຊຸມຊົນ. ກຸງເທບມະຫານະຄອນ: ໂອດຽນສະໂຕຣ໌.

ເພັດສະໄໝ ແກ້ວກະເສີມສຸກ, ຫົວໜ້າກອງຕຳຫຼວດທ່ອງທ່ຽວແຂວງວຽງຈັນປະຈຳເມືອງວັງວຽງ. (2018). ສຳພາດວັນທີ 16 ພຶດສະພາ 2018.

ລ່ອງ ຫຼວງຜ່ານ, ຜູ້ຈັດການບໍລິສັດທ່ອງທ່ຽວວັນເດີຟູນ (ໜ່ວຍບໍລິການວັນເດີຟູນຊິບລາຍ). (2018). ສຳພາດວັນທີ 22 ພຶດສະພາ 2018.

ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງວັງວຽງ. (2016). ບົດສະຫຼຸບປະຈຳປີ 2016 ເລກທີ 227/ຖວທ.ວວ, ລົງວັນທີ 30 ກັນຍາ 2016.

ຫ້ອງການແຜນການ ແລະ ການລົງທຶນເມືອງວັງວຽງ. (2017). ຂໍ້ມູນສະຖິຕິປະຊາກອນ ແລະ ຈຳນວນບ້ານພາຍໃນເມືອງ.

ອົງການທ່ອງທ່ຽວແຫ່ງຊາດ. (2009). ແຜນແມ່ບົດຄຸ້ມຄອງຕົວເມືອງທ່ອງທ່ຽວ ເມືອງວັງວຽງ 2010-2020.

ແອ ນະຄອນສີ, ເຈົ້າຂອງບໍ.ລິສັດເອເຄໂຣມຈຳກັດ ແລະ ໜ່ວຍບໍລິການເອເຄໂຣມຊິບລາຍ. (2018). ສຳພາດຄັ້ງວັນທີ 23 ພຶດສະພາ 2018.

ອຳພອນ, ເຈົ້າຂອງໜ່ວຍບໍລິການພອນທົວຊິບລາຍ. (2018). ສຳພາດຄັ້ງວັນທີ 23 ພຶດສະພາ 2018.

Schermahorn Jr. John R. (2003). Core Concepts of Management. Wiley; 1 edition. 103-107